ປົດລາຍງານເສດຖະກິດ
2023



ສາລະບານ

ຄຳເຫັນຜູ້ອ່ານ ທະນາຄານແຫ່ງ ສປປ ລາວ 1

I. ການຂະຫຍາຍຕົວຂອງເສດຖະກິດ ສປປ ລາວ 3

1.1. ຂະແໜງອຸດສາຫະກຳ 3

1.2. ຂະແໜງກະສິກຳ 4

1.3. ຂະແໜງບໍລິການ 5

1.4. ອັດຕາເງິນເຟີ້ 6

II. ຂະແໜງການເງິນຂອງລັດ 7

2.1. ຖານະການເງິນຂອງລັດ 7

2.2. ລາຍຮັບງົບປະມານ 7

2.3. ລາຍຈ່າຍງົບປະມານ 8

2.4. ດຸ່ນດ່ຽງງົບປະມານ 9

III. ຂະແໜງເງິນຕາ-ການເງິນ 9

3.1. ນະໂຍບາຍເງິນຕາ 9

3.2. ນະໂຍບາຍອັດຕາແລກປ່ຽນ 10

3.3. ການຄຸ້ມຄອງເງິນຕາຕ່າງປະເທດ 11

3.4. ຖານເງິນຕາ 12

3.5. ປະລິມານເງິນ 13

3.6. ອັດຕາດອກເບ້ຍ 13

3.7. ເງິນຝາກ 14

3.8. ສິນເຊື່ອ 15

3.9. ລະບົບສະຖາບັນການເງິນ 16

3.10. ການຄຸ້ມຄອງລະບົບການຊຳລະ 17

3.11. ການຄຸ້ມຄອງຕະຫຼາດຫຼັກຊັບ 18

IV. ດຸນການຊຳລະກັບຕ່າງປະເທດ 19

4.1. ດຸນການຊຳລະລວມ 19

4.2. ດຸນບັນຊີຊຳລະປົກກະຕິ 20

4.3. ດຸນບັນຊີການເງິນ 21

V. ໜີ້ສິນຕໍ່ຕ່າງປະເທດ 21

VI. ທ່າອ່ຽງທາງດ້ານເສດຖະກິດຂອງ ສປປ ລາວ ໃນປີ 2024 22
ຄະນະຜູ້ອຳນວຍການທະນາຄານແຫ່ງ ສປປ ລາວ 24
ສະພາບໍລິຫານທະນາຄານແຫ່ງ ສປປ ລາວ 25
ຄະນະກຳມະການນະໂຍບາຍເງິນຕາຂອງສະພາບໍລິຫານ 26
ຄະນະກຳມະການສະຖຽນລະພາບທາງດ້ານການເງິນຂອງສະພາບໍລິຫານ.....27
ຄະນະກຳມະການກວດກາຂອງສະພາບໍລິຫານ.....28
ແຜນວາດ ໂຄງຮ່າງການຈັດຕັ້ງຂອງທະນາຄານແຫ່ງ ສປປ ລາວ ປີ 2023.....29

ສາລະບານຮູບສະແດງ

ຮູບສະແດງ 1. ອັດຕາການຂະຫຍາຍຕົວຂອງເສດຖະກິດ ແຕ່ປີ 2019-2023 3

ຮູບສະແດງ 2. ການປະກອບສ່ວນໃນການຂະຫຍາຍຕົວເສດຖະກິດຂອງຂະແໜງອຸດສາຫະກຳ..... 4

ຮູບສະແດງ 3. ການປະກອບສ່ວນໃນການຂະຫຍາຍຕົວຂອງຂະແໜງກະສິກຳ 5

ຮູບສະແດງ 4. ການປະກອບສ່ວນໃນການຂະຫຍາຍຕົວຂອງຂະແໜງບໍລິການ 6

ຮູບສະແດງ 5. ການປະກອບສ່ວນຂອງໝວດສິນຄ້າທີ່ສຳຄັນຕໍ່ອັດຕາເງິນເຟີ້ລວມ..... 7

ຮູບສະແດງ 6. ລາຍຮັບງົບປະມານ 8

ຮູບສະແດງ 7. ລາຍຈ່າຍງົບປະມານ..... 8

ຮູບສະແດງ 8. ດຸ່ນດ່ຽງງົບປະມານ 9

ຮູບສະແດງ 9. ການປ່ຽນແປງຂອງອັດຕາແລກປ່ຽນ (+) ແຂງຄ່າ ແລະ (-) ອ່ອນຄ່າ ທຽບໃສ່ໄລຍະດຽວກັນ ຂອງປີຜ່ານມາ 11

ຮູບສະແດງ 10. ໂຄງປະກອບຂອງຖານເງິນຕາ..... 12

ຮູບສະແດງ 11. ການຂະຫຍາຍຕົວຂອງປະລິມານເງິນ M2 13

ຮູບສະແດງ 12. ອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ຂອງທະນາຄານທຸລະກິດ ໄລຍະ 12 ເດືອນ..... 14

ຮູບສະແດງ 13. ໂຄງປະກອບຂອງເງິນຝາກ..... 14

ຮູບສະແດງ 14. ການຂະຫຍາຍຕົວຂອງຍອດເງິນຝາກ..... 15

ຮູບສະແດງ 15. ສິນເຊື່ອຂອງທະນາຄານທຸລະກິດ ແຍກຂະແໜງການ..... 16

ຮູບສະແດງ 16. ດຸນການຊຳລະກັບຕ່າງປະເທດ..... 19

ຮູບສະແດງ 17. ລວມຍອດຄັງສຳຮອງເງິນຕາຕ່າງປະເທດ..... 19

ຮູບສະແດງ 18. ໂຄງປະກອບຂອງດຸນບັນຊີຊຳລະປົກກະຕິ 20

ຮູບສະແດງ 19. ໂຄງປະກອບຂອງດຸນບັນຊີການເງິນ..... 21

ຮູບສະແດງ 20. ໜີ້ສິນຕ່າງປະເທດ 22

ສາລະບານຕາຕະລາງ

ຕາຕະລາງທີ 1. ຕົວຊີ້ບອກເສດຖະກິດທີ່ສຳຄັນຂອງ ສປປ ລາວ 30

ຕາຕະລາງທີ 2. ລວມຍອດຜະລິດຕະພັນພາຍໃນຄິດໄລ່ຕາມມູນຄ່າເພີ່ມ.....31

ຕາຕະລາງທີ 3. ດັດສະນີລາຄາຜູ້ຊົມໃຊ້ (ທຽບຖານ ເດືອນ 12/2015=100) 32

ຕາຕະລາງທີ 4. ອັດຕາເງິນເຟີ້ 33

ຕາຕະລາງທີ 5. ຖານະການເງິນແຫ່ງລັດ.....34

ຕາຕະລາງທີ 6. ລາຍຮັບງົບປະມານ.....36

ຕາຕະລາງທີ 7. ຖານະການເງິນຂອງທະນາຄານແຫ່ງ ສປປ ລາວ 37

ຕາຕະລາງທີ 8. ຖານະການເງິນຂອງທະນາຄານທຸລະກິດ 38

ຕາຕະລາງທີ 9. ຖານະເງິນຕາຂອງລະບົບທະນາຄານ 39

ຕາຕະລາງທີ 10. ອັດຕາດອກເບ້ຍສະເລ່ຍຂອງທະນາຄານທຸລະກິດ.....40

ຕາຕະລາງທີ 11. ເງິນຝາກຂອງທະນາຄານທຸລະກິດ (ຕື້ກີບ) 42

ຕາຕະລາງທີ 12. ສິນເຊື່ອຂອງທະນາຄານທຸລະກິດ (ຕື້ກີບ) 43

ຕາຕະລາງທີ 13. ດຸນການຊຳລະກັບຕ່າງປະເທດ (ລ້ານໂດລາສະຫະລັດ).....44

ຕາຕະລາງທີ 14. ການຄ້າຕ່າງປະເທດ (ລ້ານໂດລາສະຫະລັດ) 46

ຕາຕະລາງທີ 15. ໜີ້ສິນຕໍ່ຕ່າງປະເທດ (ລ້ານໂດລາສະຫະລັດ).....47

ຕາຕະລາງທີ 16. ອັດຕາແລກປ່ຽນທະນາຄານທຸລະກິດ.....48

ຕາຕະລາງທີ 17. ຕົວເລກນັກທ່ອງທ່ຽວ ແລະ ລາຍຮັບຈາກການທ່ອງທ່ຽວຂອງ ສປປ ລາວ 49



ຄຳເຫັນຜູ້ວ່າການ ທະນາຄານແຫ່ງ ສປປ ລາວ

ໃນປີ 2023, ເສດຖະກິດຂອງ ສປປ ລາວ ຍັງສືບຕໍ່ໄດ້ຮັບຜົນກະທົບຈາກການລະບາດພະຍາດໂຄວິດ-19 ແລະ ປະເຊີນກັບສິ່ງທ້າທາຍຫຼາຍດ້ານ ຕົ້ນຕໍແມ່ນ ຄວາມຜັນຜວນຄ່າເງິນສະກຸນຫຼັກໃນຕະຫຼາດການເງິນ ສາກົນ, ສະພາບຂໍ້ຂັດແຍ່ງທາງດ້ານພູມສາດການເມືອງ ທີ່ເຮັດໃຫ້ລາຄາສິນຄ້າໃນໝວດ ພະລັງງານ ແລະ ສະບຽງອາຫານ ມີຄວາມຜັນຜວນ ແລະ ເພີ່ມຂຶ້ນຢ່າງຕໍ່ເນື່ອງ, ບວກກັບທ່າອ່ຽງການຂະຫຍາຍຕົວທີ່ຊ້າລົງຂອງ ຫຼາຍຂະແໜງເສດຖະກິດ ເນື່ອງຈາກການດຳເນີນນະໂຍບາຍເງິນຕາແບບຮັດກຸມຂອງທະນາຄານກາງ ເພື່ອແກ້ ໄຂສະພາບອັດຕາເງິນເຟີ້ ໃນຫຼາຍປະເທດທົ່ວໂລກ ເຊິ່ງສົ່ງຜົນໃຫ້ເງິນເຟີ້ມີອັດຕາຫຼຸດລົງເມື່ອທຽບໃສ່ປີຜ່ານມາ ແຕ່ກໍຍັງຢູ່ໃນອັດຕາທີ່ສູງເກີນລະດັບຄາດໝາຍກຳນົດໄວ້. ດ້ວຍເຫດຜົນທີ່ກ່າວມານັ້ນ, ເຮັດໃຫ້ເສດຖະກິດ ໂລກຂະຫຍາຍຕົວພຽງແຕ່ 3% ຈາກທີ່ຄາດຄະເນໄວ້ 4,5%. ການຂະຫຍາຍຕົວຂອງເສດຖະກິດຂອງ ສປປ ລາວ ຫຼຸດລົງມາເປັນ 4,2% ຈາກ 4,4% ໃນປີ 2022 ເນື່ອງຈາກປັດໄຈພາຍນອກດັ່ງທີ່ກ່າວມານັ້ນ ປະກອບ ກັບປັດໄຈພາຍໃນທາງດ້ານເສດຖະກິດຍັງບໍ່ທັນເຂັ້ມແຂງ ຕ້ອງເພິ່ງພາການນຳເຂົ້າຈາກຕ່າງປະເທດ ບວກກັບ ພັນທະໜີ້ສິນຕໍ່ຕ່າງປະເທດທີ່ຍັງຢູ່ໃນລະດັບສູງ, ຄັງສຳຮອງເງິນຕາຕ່າງປະເທດທີ່ຍັງມີຈຳກັດ, ການສະໜອງ ເງິນຕາຕ່າງປະເທດຂອງລະບົບທະນາຄານຍັງບໍ່ສົມດຸ່ນກັບຄວາມຕ້ອງການຂອງສັງຄົມ. ສິ່ງເຫຼົ່ານັ້ນ, ໄດ້ສ້າງແຮງ ກົດດັນຕໍ່ຄ່າເງິນກີບທຽບກັບເງິນຕາຕ່າງປະເທດສະກຸນຫຼັກ ແມ່ນຢູ່ໃນທ່າອ່ຽງອ່ອນຄ່າ ແລະ ໄດ້ສົ່ງຜ່ານໄປສູ່ ອັດຕາເງິນເຟີ້ ສະເລ່ຍ ໃນລະດັບ 31,23% ໃນປີ 2023 ຈາກ 23% ໃນປີ 2022.

ສະນັ້ນ, ເພື່ອຫຼຸດຜ່ອນຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນ ທັງເປັນການບັນລຸເປົ້າໝາຍອາລະ ແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ, ການເງິນ-ເງິນຕາ ໃຫ້ປະກົດຜົນເປັນຈິງ, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ນຳໃຊ້ມາດຕະການ, ເຄື່ອງມືນະໂຍບາຍເງິນຕາ ໃນທິດທາງທີ່ຮັດກຸມ ຫຼາຍຂຶ້ນ: ເປັນຕົ້ນ ການປັບຂຶ້ນອັດຕາດອກເບ້ຍພື້ນຖານຂອງ ທຫລ, ປັບເພີ່ມອັດຕາສ່ວນເງິນແຮຝາກບັງຄັບ. ພ້ອມທັງນຳໃຊ້ມາດຕະການຄຸ້ມຄອງປະລິມານເງິນໃນລະບົບເສດຖະກິດດ້ວຍການສືບຕໍ່ອອກ ແລະ ຈຳໜ່າຍ ພັນທະບັດ ທຫລ ທັງໃນຕະຫຼາດເປີດ ແລະ ໃຫ້ແກ່ມວນຊົນດ້ວຍອັດຕາດອກເບ້ຍທີ່ຈູງໃຈ. ຄຽງຄູ່ກັນນັ້ນ, ໄດ້ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນ ຕາມກົນໄກຕະຫຼາດ ທີ່ມີການຄຸ້ມຄອງຂອງລັດ ໂດຍການກຳ ນົດອັດຕາອ້າງອີງເງິນກີບທຽບເງິນໂດລາສະຫະລັດ ໃຫ້ທະນາຄານທຸລະກິດເປັນບ່ອນອີງໃນການກຳນົດໃນແຕ່

ລະວັນ ແລະ ໄດ້ຂະຫຍາຍຂອບອັດຕາແລກປ່ຽນລະຫວ່າງສະກຸນເງິນກີບກັບໂດລາສະຫະລັດທຽບໃສ່ອັດຕາອ້າງອີງປະຈຳວັນ ຈາກ ±4,5% ເປັນ ±7,5% ແລະ ກຳນົດສ່ວນຕ່າງລະຫວ່າງອັດຕາຊື້ ແລະ ຂາຍ ບໍ່ເກີນ 2% ສຳລັບ ເງິນກີບກັບເງິນຕາຕ່າງປະເທດ. ພ້ອມນີ້, ໄດ້ສືບຕໍ່ຈັດຕັ້ງປະຕິບັດວຽກງານຄຸ້ມຄອງເງິນຕາຕ່າງປະເທດ ໃຫ້ເປັນລະບົບຄົບຊຸດຂຶ້ນ ໂດຍໄດ້ສ້າງຕັ້ງກົມຄຸ້ມຄອງເງິນຕາຕ່າງປະເທດຂຶ້ນ, ປັບປຸງນິຕິກຳລຸ່ມກົດໝາຍໃນການຄຸ້ມຄອງເງິນຕາຕ່າງປະເທດ ຈຳນວນ 9 ສະບັບ, ປະສານສົມທົບກັບພາກສ່ວນລັດທີ່ກ່ຽວຂ້ອງໃນການຄຸ້ມຄອງຫົວໜ່ວຍທຸລະກິດສົ່ງອອກ, ການລ້ຽງທຶນຈາກຕ່າງປະເທດ ເພື່ອຊຸກຍູ້ໃຫ້ນຳລາຍຮັບ ກໍຄື ແຫຼ່ງທຶນ ເຂົ້າມາໃນປະເທດໃຫ້ຫຼາຍຂຶ້ນ. ພ້ອມທັງຕິດຕາມກວດກາ ແລະ ປະຕິບັດມາດຕະການຕໍ່ພາກສ່ວນຕ່າງໆທີ່ເຄື່ອນໄຫວທຸລະກຳເງິນຕາຕ່າງປະເທດ ທີ່ບໍ່ສອດຄ່ອງຕາມກົດໝາຍ. ນອກຈາກນີ້ ວຽກງານລະບົບການຊຳລະ ກໍໄດ້ປັບປຸງກົດໝາຍວ່າດ້ວຍລະບົບການຊຳລະ ແລະ ພັດທະນາລະບົບການຊຳລະທຸລະກຳຍ່ອຍ ຜ່ານ QR Code ທັງພາຍໃນ ແລະ ລະຫວ່າງປະເທດໃຫ້ມີຄວາມທັນສະໄໝ. ພ້ອມນີ້ ໄດ້ເອົາໃຈໃສ່ຄຸ້ມຄອງສະຖາບັນການເງິນ ໃຫ້ມີຄວາມໝັ້ນຄົງ ແລະ ເຂັ້ມແຂງ ເປັນຕົ້ນ ໄດ້ປະກາດໃຊ້ກົດໝາຍ ວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ແລະ ປັບປຸງນິຕິກຳລຸ່ມກົດໝາຍຈຳນວນໜຶ່ງ ພ້ອມທັງ ອອກນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ແລະ ສິນເຊື່ອກະຈາຍສູ່ທ້ອງຖິ່ນ ແລະ ສ້າງເງື່ອນໄຂໃຫ້ລະບົບທະນາຄານສາມາດສະໜອງເງິນຕາຕ່າງປະເທດ ໃຫ້ແກ່ການນຳເຂົ້າສິນຄ້າບູລິມະສິດໄດ້ຢ່າງພຽງພໍ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ສັງຄົມ, ປັບປຸງການເຜີຍແຜ່ຂໍ້ມູນຂ່າວສານ ແລະ ວຽກງານສື່ມວນຊົນຫຼາຍຂຶ້ນ.

ທິດທາງ ເສດຖະກິດ ສປປ ລາວ ໃນປີຕໍ່ໜ້າ, ເຖິງແມ່ນວ່າສະພາບແວດລ້ອມສາກົນ ຍັງມີຄວາມຜັນແປຢ່າງສັບສົນ, ແຕ່ສະພາບພາຍໃນໄດ້ມີການປະຕິຮູບຫຼາຍຢ່າງ ເພື່ອສະໜັບສະໜູນໃຫ້ເສດຖະກິດພາຍໃນມີຄວາມເຂັ້ມແຂງ ໂດຍສະເພາະຫຼາຍຂະແໜງການໄດ້ປະຕິບັດນະໂຍບາຍຂອງຕົນໃນທິດທາງທີ່ຮັດກຸມຂຶ້ນ, ການຄຸ້ມຄອງເງິນຕາຕ່າງປະເທດ ຫັນເຂົ້າສູ່ກົດໝາຍໃນທິດທາງທີ່ເຂັ້ມງວດຂຶ້ນ, ການປະສານສົມທົບກັບ ຂະແໜງການລັດມີຄວາມກົມກຽວ ແລະ ໄປໃນທິດທາງດຽວກັນຫຼາຍຂຶ້ນ ແລະ ໃນປີ 2024 ກໍເປັນປີທ່ອງທ່ຽວລາວ ແລະ ເປັນເຈົ້າພາບຈັດກອງປະຊຸມອາຊຽນ. ຈາກດ້ານບວກເຫຼົ່ານັ້ນ, ຄາດວ່າເສດຖະກິດ ສປປ ລາວ ຈະຂະຫຍາຍຕົວໃນລະດັບ 4,3%-4,5%, ອັດຕາເງິນເຟີ້ຄ່ອຍໆຫຼຸດລົງຕາມເປົ້າໝາຍທີ່ກຳນົດ, ຄັງສຳຮອງເງິນຕາຕ່າງປະເທດຄ່ອຍໆເຂັ້ມແຂງຂຶ້ນ, ຄຸ້ມຄອງອັດຕາແລກປ່ຽນໃຫ້ເໜັງຕີງໃນທິດທາງທີ່ບໍ່ສ້າງແຮງກົດດັນຕໍ່ອັດຕາເງິນເຟີ້ ທັງໝົດນັ້ນເພື່ອປະກອບສ່ວນຊຸກຍູ້ການຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ໝັ້ນທ່ຽງ ເຮັດໃຫ້ສະພາບເສດຖະກິດ-ການເງິນ ກ້າວເຂົ້າສູ່ສະພາບປົກກະຕິໂດຍໄວ ແລະ ມີການເຕີບໂຕຍືນຍົງເທື່ອລະກ້າວ.


ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ບຸນເຫຼືອ ສິນໄຊວໍຣະວົງ

I. ການຂະຫຍາຍຕົວຂອງເສດຖະກິດ ສປປ ລາວ

ໃນປີ 2023, ເສດຖະກິດຂອງ ສປປ ລາວ ຢູ່ໃນໄລຍະເລີ່ມຕົ້ນຟື້ນຕົວຈາກຜົນການແຜ່ລະບາດຂອງພະຍາດໂຄວິດ 19 ແລະ ຜົນກະທົບຈາກໄພທຳມະຊາດ ຈຶ່ງເຮັດໃຫ້ເສດຖະກິດ ຍັງສືບຕໍ່ພົບກັບຄວາມຫຍຸ້ງຍາກ ເປັນຕົ້ນ: ສະຖຽນລະພາບທາງດ້ານການເງິນ-ເງິນຕາ, ອັດຕາແລກປ່ຽນອ່ອນຄ່າ, ອັດຕາເງິນເຟີ້ທີ່ຍັງຢູ່ໃນລະດັບສູງ. ລັດຖະບານກໍຄື ທຸກຂະແໜງການກ່ຽວຂ້ອງໄດ້ສືບຕໍ່ແກ້ໄຂບັນຫາສະພາບເສດຖະກິດ ກໍຄື ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໂດຍສະເພາະ ການສຸມໃສ່ຊຸກຍູ້ການຜະລິດສິນຄ້າ ເພື່ອທົດແທນການນຳເຂົ້າ, ສົ່ງເສີມການສົ່ງອອກ ແລະ ຊຸກຍູ້ການທ່ອງທ່ຽວຢ່າງແຂງແຮງ ຊຶ່ງຈະສາມາດຫຼຸດຜ່ອນການນຳເຂົ້າ ແລະ ສ້າງລາຍຮັບໃຫ້ແກ່ລະບົບເສດຖະກິດເພີ່ມຂຶ້ນ. ການຂະຫຍາຍຕົວຂອງລວມຍອດຜະລິດຕະພັນພາຍໃນ (GDP) ໃນປີ 2023 ຫຼຸດລົງ ຢູ່ໃນລະດັບ 4,2% (ແຜນ 4,5%) ຈາກ 4,4% ໃນປີ 2022 **(ຮູບສະແດງ 1 ແລະ ຕາຕະລາງຊ້ອນທ້າຍ 1)** ແລະ ມູນຄ່າລວມຍອດຜະລິດຕະພັນພາຍໃນ 265.475 ຕື້ກີບ (ຕາມລາຄາໃນປີ) ແລະ ລາຍໄດ້ສະເລ່ຍຕໍ່ຫົວຄົນ 1.832 ໂດລາສະຫະລັດທຽບເທົ່າ ຫຼຸດລົງ ຈາກ 2.022 ໂດລາສະຫະລັດທຽບເທົ່າ ໃນປີ 2022 **(ຕາຕະລາງຊ້ອນທ້າຍ 2)**.

ຮູບສະແດງ 1. ອັດຕາການຂະຫຍາຍຕົວຂອງເສດຖະກິດ ແຕ່ປີ 2019-2023




ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ (ກະຊວງແຜນການ ແລະ ການລົງທຶນ).

1.1. ຂະແໜງອຸດສາຫະກຳ

ຂະແໜງອຸດສາຫະກຳ ໄດ້ຂະຫຍາຍຕົວ ຫຼຸດລົງ ໃນລະດັບ 3,1% ຈາກ 4,4% ໃນປີ 2022 ເຊິ່ງກວມເອົາ 32,1% ຂອງ GDP ແລະ ປະກອບສ່ວນຕໍ່ການຂະຫຍາຍຕົວຂອງ GDP ໃນລະດັບ 1,2% ຈາກ 1,7% ໃນປີ 2022. ສາເຫດຍ້ອນທ່າແຮງຕົ້ນຕໍ ຂອງຂະແໜງອຸດສາຫະກຳ ກໍຄື ທ່າແຮງຂອງຂະແໜງໄຟຟ້າ ຂະຫຍາຍຕົວຫຼຸດລົງ 0,5% ຈາກ 2,7% ທຽບໃສ່ປີຜ່ານມາ ເນື່ອງຈາກປະເຊີນກັບບັນຫາການປ່ຽນແປງຂອງສະພາບດິນຟ້າອາກາດ ສົ່ງຜົນຕໍ່ການຫຼຸດລົງຂອງປະລິມານການຜະລິດໄຟຟ້າ, ໃນຂະນະທີ່ຄວາມຕ້ອງການນຳໃຊ້ໄຟຟ້າເພີ່ມສູງຂຶ້ນ.

ພ້ອມນີ້, ທ່າແຮງອື່ນໆທີ່ປະກອບສ່ວນໃນການຂະຫຍາຍຕົວຂອງຂະແໜງອຸດສາຫະກຳ ເພີ່ມຂຶ້ນ ແຕ່ມີ ທ່າອ່ຽງຫຼຸດລົງ ເປັນຕົ້ນ ບໍ່ແຮ່ ແລະ ການຂຸດຄົ້ນ ຂະຫຍາຍຕົວ 2,3% (ຈາກ 2,8%), ອຸດສາຫະກຳ ຜະລິດ ສະບຽງອາຫານ ຂະຫຍາຍຕົວເພີ່ມຂຶ້ນ 2,1% (ຈາກ 2,2%), ອຸດສາຫະກຳຜະລິດແຜ່ນແພ, ເຄື່ອງນຸ່ງຫົ່ມ, ເກີບ ແລະ ເຄື່ອງໜັງ ຂະຫຍາຍຕົວ 2,5% (ຈາກ 2,6%), ການຂະຫຍາຍຕົວຂອງອຸດສາຫະກຳຜະລິດເຄື່ອງ ດື່ມ ແລະ ຢາສູບ 3,9% (ຈາກ 4,3%) ແລະ ການກໍ່ສ້າງຂະຫຍາຍຕົວຫຼຸດລົງ ຢູ່ໃນລະດັບ 6,2% ຈາກ 7,2% ທຽບໃສ່ປີຜ່ານມາ. ສາເຫດຍ້ອນບາງໂຄງການກໍ່ສ້າງສຳລັບການພັດທະນາພື້ນຖານໂຄງລ່າງຂະໜາດໃຫຍ່ ໄດ້ ສຳເລັດລົງ. ສ່ວນອຸດສາຫະກຳປຸງແຕ່ງອື່ນໆ; ແລະ ນ້ຳປະປາ ແລະ ບຳບັດສິ່ງເສດເຫຼືອ ຂະຫຍາຍຕົວເພີ່ມຂຶ້ນ 6,4% ແລະ 5,6% ຕາມລຳດັບ **(ຮູບສະແດງ 2 ແລະ ຕາຕະລາງຊ້ອນທ້າຍ 2)**.

ຮູບສະແດງ 2. ການປະກອບສ່ວນໃນການຂະຫຍາຍຕົວເສດຖະກິດຂອງຂະແໜງອຸດສາຫະກຳ




ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ (ກະຊວງແຜນການ ແລະ ການລົງທຶນ).

1.2. ຂະແໜງກະສິກຳ

ຂະແໜງກະສິກຳ ຂະຫຍາຍຕົວຢູ່ໃນລະດັບ 3,7% ກວມເອົາ 21,0% ຂອງ GDP ແລະ ປະກອບສ່ວນ ຕໍ່ການຂະຫຍາຍຕົວຂອງ GDP ໃນລະດັບ 0,5% ຊຶ່ງທ່າແຮງທີ່ພົ້ນເດັ່ນໃນຂະແໜງການນີ້ແມ່ນ ການປູກຝັງ ຂະຫຍາຍຕົວ 3,6%. ໃນນີ້, ສາມາດຜະລິດເຂົ້າໄດ້ 3,98 ລ້ານໂຕນ (ເຂົ້ານາປີ 3,1 ລ້ານໂຕນ, ເຂົ້ານາແຊງ 0,44 ລ້ານໂຕນ ແລະ ເຂົ້າໄຮ່ ປະຕິບັດໄດ້ 0,20 ລ້ານໂຕນ). ນອກຈາກນັ້ນ, ການລ້ຽງສັດ ຂະຫຍາຍຕົວ 4,2%, ຂະແໜງປ່າໄມ້ ແລະ ຂະແໜງປະມົງ ຂະຫຍາຍຕົວ 4,6% ແລະ 3,7%, ຕາມລຳດັບ **(ຮູບສະແດງ 3 ແລະ ຕາຕະລາງຊ້ອນທ້າຍ 2)**.

ຮູບສະແດງ 3. ການປະກອບສ່ວນໃນການຂະຫຍາຍຕົວຂອງຂະແໜງກະສິກຳ




ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ (ກະຊວງແຜນການ ແລະ ການລົງທຶນ).

1.3. ຂະແໜງບໍລິການ

ໃນປີ 2023, ຂະແໜງບໍລິການ ເປັນຂະແໜງການທີ່ຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດຫຼາຍທີ່ສຸດ ທຽບໃສ່ຂະແໜງການອື່ນ ໂດຍຂະຫຍາຍຕົວໃນລະດັບ 5,6% ກວມເອົາ 35,8% ຂອງການຂະຫຍາຍຕົວຂອງເສດຖະກິດແຫ່ງຊາດ ແລະ ປະກອບສ່ວນຕໍ່ການຂະຫຍາຍຕົວຂອງ GDP ເພີ່ມຂຶ້ນ ໃນລະດັບ 2,1% ຈາກ 1,9% ໃນປີ 2022. ເນື່ອງຈາກການເພີ່ມຂຶ້ນຂອງຈຳນວນນັກທ່ອງທ່ຽວ ທັງພາຍໃນ ແລະ ຕ່າງປະເທດ ທີ່ຊ່ວຍຂັບເຄື່ອນຂະແໜງນີ້, ໃນນັ້ນ ການບໍລິການທີ່ພັກອາໄສ ແລະ ອາຫານ ຂະຫຍາຍຕົວຫຼາຍທີ່ສຸດ ເພີ່ມຂຶ້ນເຖິງ 41,3% ຈາກ 8,6% ໃນປີ 2022, ຂະແໜງຂົນສົ່ງ ແລະ ສາງ ຂະຫຍາຍຕົວ 17,8%. ພ້ອມນີ້, ຍັງມີຂະແໜງການອື່ນໆທີ່ເປັນທ່າແຮງໃນການຊຸກຍູ້ການຂະຫຍາຍຕົວຂອງຂະແໜງບໍລິການ ເຊັ່ນ: ຂະແໜງຂ່າວສານ ແລະ ສື່ສານ ຂະຫຍາຍຕົວ 5,1%, ຂະແໜງສຸຂະພາບ ແລະ ສະຫວັດດີການສັງຄົມ ເພີ່ມຂຶ້ນ 4,9%, ຂະແໜງການຂາຍຍົກ-ຂາຍຍ່ອຍ ເພີ່ມຂຶ້ນ 4,6% ແລະ ຂະແໜງການເງິນ ແລະ ການປະກັນໄພ ເພີ່ມຂຶ້ນ 3,9% **(ຮູບສະແດງ 4 ແລະ ຕາຕະລາງຊ້ອນທ້າຍ 2)**.

ຮູບສະແດງ 4. ການປະກອບສ່ວນໃນການຂະຫຍາຍຕົວຂອງຂະແໜງບໍລິການ




ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ (ກະຊວງແຜນການ ແລະ ການລົງທຶນ).

1.4. ອັດຕາເງິນເຟີ້

ອັດຕາເງິນເຟີ້ຂອງ ສປປ ລາວ ໃນປີ 2023 ແມ່ນໄດ້ເພີ່ມຂຶ້ນ ຢູ່ໃນລະດັບ 31,23% ຈາກ 22,96% ໃນປີ 2022. ສາເຫດຫຼັກແມ່ນມາຈາກ ການເພີ່ມຂຶ້ນຂອງລາຄານ້ຳມັນເຊື້ອໄຟ ແລະ ລາຄາສິນຄ້າພາຍໃນທີ່ເປັນຜົນກະທົບສືບເນື່ອງມາຈາກສະພາບເງິນເຟີ້ໃນປີຜ່ານມາ ເປັນຕົ້ນ: ລາຄາເຂົ້າສານ, ປະເພດຊີ້ນ, ສັດປີກ, ອາຫານໃນຮ້ານອາຫານ ແລະ ເຄື່ອງຕົບແຕ່ງພາຍໃນເຮືອນ. ໃນນີ້ ລາຄາໝວດສິນຄ້າ ແລະ ການບໍລິການທີ່ເພີ່ມຂຶ້ນສູງກວ່າໝູ່ແມ່ນ ໝວດອາຫານ ແລະ ເຄື່ອງດື່ມທີ່ບໍ່ແມ່ນທາດເຫຼົ້າ ຢູ່ໃນລະດັບ 37,99%; ຮອງລົງມາ ແມ່ນໝວດຮ້ານອາຫານ ແລະ ໂຮງແຮມຢູ່ໃນລະດັບ 34,73%; ໝວດສຸຂະພາບ ແລະ ຢາ ຢູ່ໃນລະດັບ 30,42% ແລະ ໝວດເຄື່ອງໃຊ້ໃນເຮືອນ ຢູ່ໃນລະດັບ 28,50% **(ຮູບສະແດງ 5 ແລະ ຕາຕະລາງຊ້ອນທ້າຍ 4)**.

ສະນັ້ນ, ເພື່ອແກ້ໄຂບັນຫາອັດຕາເງິນເຟີ້ ທຫລ ໄດ້ເອົາໃຈໃສ່ຄຸ້ມຄອງປະລິມານເງິນ, ຄຸ້ມຄອງອັດຕາແລກປ່ຽນຕາມທີ່ໄດ້ສັງລວມໃນຂໍ້ III. ຄຽງຄູ່ກັນນີ້, ກໍໄດ້ປະສານສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອທົບທວນ ແລະ ຄົ້ນຄວ້າມາດຕະການຄຸ້ມຄອງລາຄາສິນຄ້າ.

ຮູບສະແດງ 5. ການປະກອບສ່ວນຂອງໝວດສິນຄ້າທີ່ສຳຄັນຕໍ່ອັດຕາເງິນເຟີ້ລວມ



ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

II. ຂະແໜງການເງິນຂອງລັດ

2.1. ຖານະການເງິນຂອງລັດ


ໃນປີ 2023, ຖານະການເງິນຂອງພາກລັດ ໄດ້ຖືກປັບປຸງໃນທິດທາງທີ່ດີຂຶ້ນທຽບຈາກປີຜ່ານມາ, ເຖິງ ແມ່ນວ່າຈະຍັງສືບຕໍ່ປະເຊີນກັບສິ່ງທ້າທາຍຫຼາຍດ້ານ ຕົ້ນຕໍ ແມ່ນພາລະໜີ້ສິນຕ່າງປະເທດທີ່ຍັງສູງ. ສະນັ້ນ, ເພື່ອແກ້ໄຂຄວາມຫຍຸ້ງຍາກທາງດ້ານງົບປະມານ ລັດຖະບານໄດ້ດຳເນີນການປັບໂຄງສ້າງການເງິນຂອງພາກລັດ ໂດຍການຄົ້ນຄວ້າອອກບັນດານະໂຍບາຍ ແລະ ນິຕິກຳຕ່າງໆ ເພື່ອແນໃສ່ການຮັດກຸມດ້ານລາຍຈ່າຍ ແລະ ຊຸກຍູ້ການເກັບລາຍຮັບໃຫ້ເພີ່ມຂຶ້ນ ເຊັ່ນ: ມີກົນໄກການຄຸ້ມຄອງງົບປະມານແຫ່ງລັດລວມສູນ ແລະ ຫັນການ ຄຸ້ມຄອງລາຍຮັບ-ລາຍຈ່າຍ ງົບປະມານແຫ່ງລັດດ້ວຍເຄື່ອງມືທີ່ທັນສະໄໝ. ພ້ອມນັ້ນ, ລັດຖະບານໄດ້ ປະຕິບັດບັນດາມາດຕະການຄຸ້ມຄອງ ແລະ ແກ້ໄຂບັນຫາໜີ້ສິນສາທາລະນະ ໃຫ້ຢູ່ໃນລະດັບທີ່ສາມາດຄຸ້ມ ຄອງໄດ້, ບໍ່ຕົກໃນເງື່ອນໄຂເປັນປະເທດທີ່ບໍ່ສາມາດຊຳລະໜີ້ສິນ. ຈາກຄວາມເອົາໃຈໃສ່ຂອງລັດຖະບານ ເພື່ອ ສຸມໃສ່ການແກ້ໄຂຄວາມຫຍຸ້ງຍາກທາງດ້ານງົບປະມານ ເຮັດໃຫ້ ໃນປີ 2023, ຖານະການເງິນຂອງລັດ ເກີນ ດຸນ 1.711,46 ຕື້ກີບ ຈາກຂາດດຸນ 445,87 ຕື້ກີບ ໃນປີ 2022. **(ຕາຕະລາງ ຊ້ອນທ້າຍ 5)**.

2.2. ລາຍຮັບງົບປະມານ

ໃນປີ 2023, ລາຍຮັບງົບປະມານປະຕິບັດໄດ້ 45.835,43 ຕື້ກີບ ເພີ່ມຂຶ້ນ 43,98% ທຽບໃສ່ປີຜ່ານມາ ກວມ 17,27% ຂອງ GDP, ໃນນີ້ ລາຍຮັບພາຍໃນ ສາມາດປະຕິບັດໄດ້ 40.951,94 ຕື້ກີບ, ເງິນຊ່ວຍເຫຼືອ ລ້ຳ 4.883,39 ຕື້ກີບ ແລະ ເງິນປະກອບສ່ວນຂອງສັງຄົມ 0,09 ຕື້ກີບ. ການເກັບລາຍຮັບໃນປີ 2023 ເຫັນ ໄດ້ຈາກລາຍຮັບພາຍໃນເພີ່ມຂຶ້ນ ທັງລາຍຮັບທີ່ແມ່ນ ແລະ ບໍ່ແມ່ນ ພາສີ-ອາກອນ ເປັນຕົ້ນ ແມ່ນການເພີ່ມຂຶ້ນ

ຂອງການເກັບລາຍຮັບຈາກອາກອນລາຍໄດ້, ຄ່າທຳນຽມຈົດທະບຽນ, ຄ່າພາກຫຼວງໄຟຟ້າ ແລະ ອື່ນໆ, ສ່ວນລາຍຮັບທີ່ບໍ່ໄດ້ມາຈາກພາສີ-ອາກອນ ເຊັ່ນ ລາຍຮັບຈາກຄ່າເຊົ່າ, ຄ່າປັບໃໝ, ຄ່າປົນຜ່ານ ແລະ ອື່ນໆ (**ຮູບສະແດງ 6 ແລະ ຕາຕະລາງຊ້ອນທ້າຍ 5-6**).

ຮູບສະແດງ 6. ລາຍຮັບງົບປະມານ




ແຫຼ່ງຂໍ້ມູນ: ກະຊວງການເງິນ.

2.3. ລາຍຈ່າຍງົບປະມານ

ລາຍຈ່າຍງົບປະມານທັງໝົດ ປະຕິບັດໄດ້ 44.123,97 ຕື້ກີບ, ເພີ່ມຂຶ້ນ 36,69% ທຽບກັບປີຜ່ານມາ, ກວມ 16,62% ຂອງ GDP, ໃນນີ້ ລາຍຈ່າຍງົບປະມານເພີ່ມຂຶ້ນ ແມ່ນມາຈາກລາຍຈ່າຍບໍລິຫານປົກກະຕິ ເພີ່ມຂຶ້ນ 28,26% ແລະ ການລົງທຶນຂອງພາກລັດ ເພີ່ມຂຶ້ນ 57% ໃນປີ 2023 (ຕາມລຳດັບ) (**ຮູບສະແດງ 7 ແລະ ຕາຕະລາງຊ້ອນທ້າຍ 5**).

ຮູບສະແດງ 7. ລາຍຈ່າຍງົບປະມານ




ແຫຼ່ງຂໍ້ມູນ: ກະຊວງການເງິນ.

2.4. ດຸ່ນດ່ຽງງົບປະມານ

ການດຸ່ນດ່ຽງງົບປະມານຂອງລັດດີຂຶ້ນໃນຈັງຫວະທີ່ກ້າວກະໂດດ ທຽບໃສ່ຊຸມປີຜ່ານມາ, ໃນປີ 2023 ການດຸ່ນດ່ຽງງົບປະມານ ຫຼຸດລົງ 0,64% ຕໍ່ GDP. ສາເຫດຍ້ອນ ຖານະການເງິນຂອງລັດຖະບານເກີນດຸນ 1.711,46 ຕື້ກີບ ຈາກທີ່ຂາດດຸນຕໍ່ເນື່ອງມາຫຼາຍປີ. ໃນນັ້ນ, ການດຸ່ນດ່ຽງງົບປະມານປະກອບດ້ວຍແຫຼ່ງທຶນພາຍໃນ (ສຸດທິ) 277,60 ຕື້ກີບ ແລະ ແຫຼ່ງທຶນຈາກຕ່າງປະເທດ (ສຸດທິ) 1.433,86 ຕື້ກີບ (**ຮູບສະແດງ 8 ແລະ ຕາຕະລາງຊ້ອນທ້າຍ 5**).

ຮູບສະແດງ 8. ດຸ່ນດ່ຽງງົບປະມານ



ແຫຼ່ງຂໍ້ມູນ: ກະຊວງການເງິນ.

III. ຂະແໜງເງິນຕາ-ການເງິນ

3.1. ນະໂຍບາຍເງິນຕາ

ເພື່ອບັນລຸເປົ້າໝາຍການຮັກສາສະຖຽນລະພາບທາງດ້ານລາຄາ, ທຫລ ໄດ້ສືບຕໍ່ດຳເນີນນະໂຍບາຍເງິນຕາໃນທິດທາງທີ່ຮັດກຸມຫຼາຍຂຶ້ນ ເປັນຕົ້ນ ໄດ້ປັບເພີ່ມອັດຕາດອກເບ້ຍພື້ນຖານຂອງ ທຫລ ສະກຸນເງິນກີບ ໄລຍະສັ້ນບໍ່ເກີນ 7 ວັນ ຈຳນວນ 1 ຄັ້ງ ຈາກ 6,5% ມາເປັນ 7,5% ຕໍ່ປີ[1], ໄດ້ປັບເພີ່ມອັດຕາສ່ວນເງິນແຮຝາກບັງຄັບ ຈຳນວນ 2 ຄັ້ງ[2,3]: ສຳລັບເງິນກີບ ປັບຈາກ 5% ເປັນ 5,5% ແລະ ມາເປັນ 8% ແລະ ສຳລັບເງິນຕາຕ່າງປະເທດ ປັບຈາກ 5% ເປັນ 8% ແລະ ມາເປັນ 10% ໃນເດືອນ 02/2023 ແລະ 08/2023, ຕາມລຳດັບ. ພ້ອມທັງ, ໄດ້ປັບປຸງອັດຕາສ່ວນການຮັກສາເງິນສົດ (ເງິນຝາກຢູ່ ທຫລ) ແລະ ພັນທະບັດ ໃນ

[1] ຂໍ້ຕົກລົງ ວ່າດ້ວຍການປັບປຸງອັດຕາດອກເບ້ຍພື້ນຖານຂອງທະນາຄານແຫ່ງ ສປປ ລາວ, ສະບັບເລກທີ 115/ທຫລ, ລົງວັນທີ 10 ກຸມພາ 2023.

[2] ຂໍ້ຕົກລົງ ວ່າດ້ວຍການປັບປຸງອັດຕາສ່ວນເງິນແຮຝາກບັງຄັບ, ສະບັບເລກທີ 777/ທຫລ, ລົງວັນທີ 23 ສິງຫາ 2023.

[3] ຂໍ້ຕົກລົງ ວ່າດ້ວຍອັດຕາສ່ວນເງິນແຮຝາກບັງຄັບ, ສະບັບເລກທີ 113/ທຫລ, ລົງວັນທີ 10 ກຸມພາ 2023.

ເງິນແຮຝາກບັງຄັບ, ສຳລັບເງິນກີບ ໄດ້ປັບອັດຕາສ່ວນການຮັກສາໃນຮູບແບບເງິນສົດ ຈາກບໍ່ຫຼຸດ 10% ມາເປັນບໍ່ຫຼຸດ 30% ແລະ ແບບພັນທະບັດ ຈາກບໍ່ເກີນ 90% ມາເປັນບໍ່ເກີນ 70% ແລະ ສຳລັບເງິນຕາຕ່າງປະເທດ ໄດ້ປັບຈາກອັດຕາສ່ວນການຮັກສາໃນຮູບແບບ ເງິນສົດ (ເງິນຝາກຢູ່ ທຫລ) ບໍ່ຫຼຸດ 70% ມາເປັນໃຫ້ຮັກສາໃນຮູບແບບເງິນສົດທັງໝົດ; ພ້ອມທັງ ສືບຕໍ່ຊຸກຍູ້ການເຄື່ອນໄຫວໃນຕະຫຼາດເປີດ ເພື່ອປະກອບສ່ວນແກ້ໄຂສະພາບຄ່ອງດ້ານງົບປະມານດ້ວຍການຈັດຕັ້ງການຈຳໜ່າຍພັນທະບັດຄັງເງິນ ຜ່ານກົນໄກການປະມູນອັດຕາດອກເບ້ຍ ຢູ່ ທຫລ. ນອກຈາກນັ້ນ, ທຫລ ໄດ້ນຳໃຊ້ມາດຕະການຄຸ້ມຄອງປະລິມານເງິນດ້ວຍການສືບຕໍ່ອອກ ແລະ ຈຳໜ່າຍພັນທະບັດ ທຫລ ໄລຍະສັ້ນໃຫ້ແກ່ມວນຊົນ, ໄດ້ອອກຜະລິດຕະພັນເງິນຝາກປະຈຳໄລຍະ 7 ວັນ ແລະ ອອກພັນທະບັດ ທຫລ ໄລຍະສັ້ນ 1 ເດືອນ, 3 ເດືອນ ແລະ 6 ເດືອນ ໃຫ້ແກ່ທະນາຄານທຸລະກິດ ຜ່ານຕະຫຼາດເປີດ.


ຜ່ານການຈັດຕັ້ງປະຕິບັດດັ່ງກ່າວເຫັນໄດ້ວ່າ ອັດຕາເງິນເຟີ້ມີທ່າອ່ຽງຫຼຸດລົງ ຈາກລະດັບ 39,27% ໃນທ້າຍປີ 2022 ແລະ ຈາກລະດັບສູງສຸດ 41,26% ໃນເດືອນ ກຸມພາ 2023 ມາເປັນ 24,37% ໃນເດືອນທັນວາ 2023 ແລະ ອັດຕາເງິນເຟີ້ສະເລ່ຍໝົດປີ 2023 ຢູ່ໃນລະດັບ 31,23%, ປະລິມານເງິນ M2 ຂະຫຍາຍຕົວໃນຈັງຫວະທີ່ຊ້າລົງ ຈາກຂະຫຍາຍຕົວທີ່ລະດັບ 36,85% ໃນທ້າຍປີ 2022 ມາເປັນ 33,26% ໃນທ້າຍປີ 2023. ເຖິງແມ່ນວ່າ ທຫລ ໄດ້ນຳໃຊ້ເຄື່ອງມືນະໂຍບາຍເງິນຕາທີ່ກ່າວມາຂ້າງເທິງນັ້ນ ແຕ່ໂດຍລວມອັດຕາເງິນເຟີ້ຍັງຢູ່ໃນລະດັບສູງ ແລະ ລາຄາສິນຄ້າທີ່ຈຳເປັນຕໍ່ການດຳລົງຊີວິດຂອງປະຊາຊົນ ຍັງສືບຕໍ່ເພີ່ມຂຶ້ນ ເນື່ອງຈາກການແກ້ໄຂບັນຫາເງິນເຟີ້ແມ່ນຕ້ອງໄດ້ໃຊ້ໄລຍະເວລາໃດໜຶ່ງ ພາຍໃຕ້ສະພາບເສດຖະກິດທີ່ບໍ່ມີຄວາມແນ່ນອນ.

3.2. ນະໂຍບາຍອັດຕາແລກປ່ຽນ

ໃນປີ 2023 ທຫລ ໄດ້ສືບຕໍ່ປະຕິບັດນະໂຍບາຍການຄຸ້ມຄອງອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ໃນທິດທາງທີ່ມີຄວາມຢືດຢຸ່ນຂຶ້ນ ໂດຍໄດ້ປັບຂອບອັດຕາແລກປ່ຽນສະກຸນເງິນກີບທຽບເທົ່າໂດລາສະຫະລັດ ຂອງທະນາຄານທຸລະກິດ ໃຫ້ກວ້າງອອກ ເພື່ອເປັນບ່ອນອີງໃນການກຳນົດອັດຕາແລກປ່ຽນຊື້-ຂາຍປະຈຳວັນກັບລູກຄ້າ ຈາກຢູ່ໃນລະດັບ ±4,5% ມາເປັນ ±7,5%; ສ່ວນການກຳນົດສ່ວນຕ່າງລະຫວ່າງອັດຕາຊື້-ຂາຍແມ່ນປັບປຸງ ຈາກ ບໍ່ເກີນ 1% ສຳລັບການແລກປ່ຽນເງິນກີບກັບໂດລາສະຫະລັດ, ເງິນບາດ, ເງິນຢວນ ແລະ ເງິນເອີໂຣ ມາເປັນ ບໍ່ເກີນ 2% ສຳລັບການແລກປ່ຽນເງິນກີບກັບເງິນຕາຕ່າງປະເທດ. ພ້ອມດຽວກັນນີ້, ທ່າອ່ຽງການເຄື່ອນໄຫວຂອງອັດຕາແລກປ່ຽນອ້າງອີງກໍໄດ້ຮັບການຕິດຕາມ, ປະເມີນ ແລະ ດັດປັບຕາມຄວາມເໝາະສົມ ເພື່ອໃຫ້ສອດຄ່ອງກັບເງື່ອນໄຂຕະຫຼາດ. ນອກຈາກນີ້, ໄດ້ຊຸກຍູ້ໃຫ້ລະບົບທະນາຄານ ສືບຕໍ່ດັດສົມເງິນຕາຕ່າງປະເທດໃຫ້ແກ່ການນຳເຂົ້າສິນຄ້າຍຸດທະສາດ ແລະ ຈຳເປັນ, ພ້ອມທັງ ຊຸກຍູ້ທະນາຄານທຸລະກິດຂະຫຍາຍການບໍລິການແລກປ່ຽນເງິນຕາ ດ້ວຍຫຼາຍຮູບແບບ ແລະ ອອກລະບຽບໃຫ້ທະນາຄານທຸລະກິດສາມາດນຳໃຊ້ເຄື່ອງມືທັນສະໄໝ ເພື່ອໃຫ້ປະຊາຊົນສາມາດສະເໜີແລກປ່ຽນເງິນຕາຜ່ານເຄື່ອງມືດັ່ງກ່າວ.

ຜ່ານການຈັດຕັ້ງປະຕິບັດດັ່ງກ່າວ ໃນປີ 2023 ອັດຕາແລກປ່ຽນທະນາຄານທຸລະກິດສະເລ່ຍທີ່ອລະບົບເງິນກີບທຽບເງິນໂດລາສະຫະລັດ ສະເລ່ຍຢູ່ໃນລະດັບ 18.717,82 ກີບ/ໂດລາສະຫະລັດ ອ່ອນຄ່າ 23,46% ທຽບໃສ່ປີຜ່ານມາ, ເງິນກີບທຽບເງິນບາດ ສະເລ່ຍຢູ່ໃນລະດັບ 560,95 ກີບ/ບາດ ອ່ອນຄ່າ 22,63% ທຽບໃສ່ປີຜ່ານມາ; ໃນຂະນະທີ່ສ່ວນຕ່າງລະຫວ່າງອັດຕາແລກປ່ຽນຂອງທະນາຄານທຸລະກິດ ແລະ ຕະຫຼາດ ຢູ່ໃນລະດັບ 7,11% ສຳລັບເງິນກີບ/ໂດລາສະຫະລັດ ແລະ 3,18% ສຳລັບເງິນກີບ/ບາດ **(ຮູບສະແດງ 9)**.

ຮູບສະແດງ 9. ການປ່ຽນແປງຂອງອັດຕາແລກປ່ຽນ (+) ແຂງຄ່າ ແລະ (-) ອ່ອນຄ່າ ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ



ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ.

3.3. ການຄຸ້ມຄອງເງິນຕາຕ່າງປະເທດ

ການຄຸ້ມຄອງເງິນຕາຕ່າງປະເທດ ແມ່ນວຽກງານໜຶ່ງທີ່ສຳຄັນ ເພື່ອຮັບປະກັນຄວາມສົມດຸນດ້ານລາຍຮັບ-ລາຍຈ່າຍ ທາງດ້ານເງິນຕາຕ່າງປະເທດ ຂອງປະເທດ ຊຶ່ງ ທຫລ ເຫັນໄດ້ຄວາມສຳຄັນຕໍ່ກັບວຽກງານດັ່ງກ່າວ ຈຶ່ງໄດ້ມີການຄຸ້ມຄອງເປັນລະບົບຄົບຊຸດຍິ່ງຂຶ້ນ ໂດຍສ້າງຕັ້ງກົນຄຸ້ມຄອງເງິນຕາຕ່າງປະເທດ ແລະ ປັບປຸງກົນໄກໃນການຄຸ້ມຄອງ ແລະ ນິຕິກຳໃຫ້ສອດຄ່ອງກັບສະພາບຕົວຈິງ ເພື່ອໃຫ້ສາມາດຄຸ້ມຄອງລາຍຮັບທີ່ເປັນເງິນຕາຕ່າງປະເທດ ເຂົ້າມາລວມສູນໃນລະບົບທະນາຄານ ເປັນຕົ້ນ: ໄດ້ຄົ້ນຄວ້າ ແລະ ສະເໜີລັດຖະບານ ອອກຄຳສັ່ງ ສະບັບເລກທີ 10/ນຍ[5], ປັບປຸງນິຕິກຳລຸ່ມກົດໝາຍ ຄຸ້ມຄອງເງິນຕາຕ່າງປະເທດ ຈຳນວນ 09 ສະບັບ ພ້ອມທັງ ເຜີຍແຜ່ນິຕິກຳດັ່ງກ່າວຢ່າງກວ້າງຂວາງ ແຕ່ຂັ້ນສູນກາງ ຫາ ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ ທັງໝົດ 51 ຄັ້ງ. ນອກຈາກນີ້, ໄດ້ປັບປຸງກົນໄກຄຸ້ມຄອງເງິນຕາຕ່າງປະເທດທີ່ຕິດພັນກັບລາຍຮັບຈາກການສົ່ງອອກ ກໍຄື ຊຸກຍູ້ໃຫ້ຫົວໜ່ວຍທຸລະກິດນຳເຂົ້າ-ສົ່ງອອກ ລົງທະບຽນກັບກະຊວງອຸດສາຫະກຳ ແລະ ການຄ້າ, ເປີດ/ນຳໃຊ້ ບັນຊີສະເພາະ ກັບທະນາຄານທຸລະກິດ. ມາຮອດທ້າຍປີ 2023 ສາມາດປະຕິບັດໄດ້ ຈຳນວນ 1.029 ບໍລິສັດ (ໃນນັ້ນ, 253 ບໍລິສັດນຳເຂົ້າ, 187 ບໍລິສັດສົ່ງອອກ ແລະ 589 ບໍລິສັດ ນຳເຂົ້າ-


[5] ຄຳສັ່ງວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 10/ນຍ, ລົງວັນທີ 17 ທັນວາ 2023;

ສົ່ງອອກ. ຈາກກົນໄກຄຸ້ມຄອງດັ່ງກ່າວ ສາມາດນຳລາຍຮັບທີ່ເປັນເງິນຕາຕ່າງປະເທດ ຜ່ານລະບົບທະນາຄານ (ITRS) ມີທ່າອ່ຽງດີຂຶ້ນ ກວມເອົາ 55,47% ໃນປີ 2023 ຈາກ 36,26% ໃນປີ 2022 ປະຕິບັດໄດ້ເກີນຄາດໝາຍທີ່ສະພາແຫ່ງຊາດກຳນົດ[6]. ພ້ອມດຽວກັນນີ້, ໄດ້ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການຕິດຕາມກວດກາການຕິດປະກາດ, ການກຳນົດລາຄາສິນຄ້າ ແລະ ບໍລິການໃຫ້ເປັນເງິນກີບ ລວມທັງ ການແລກປ່ຽນເງິນຕາທີ່ບໍ່ໄດ້ຮັບອະນຸຍາດ. ຄຽງຄູ່ກັນນີ້, ໄດ້ພັດທະນາລະບົບຄຸ້ມຄອງກະແສເງິນຕາຕ່າງປະເທດ (CMS) ເພື່ອເຊື່ອມໂຍງ ຮ່ວມກັນ ລະຫວ່າງຂະແໜງການ ແລະ ທະນາຄານທຸລະກິດ ແລະ ຊຸກຍູ້ ແລະ ສົ່ງເສີມການນຳໃຊ້ສະກຸນເງິນທ້ອງຖິ່ນ (ກີບ-ດົງ ແລະ ກີບ-ຢວນ).

3.4. ຖານເງິນຕາ

ຮອດເດືອນ 12 ປີ 2023 ຖານເງິນຕາ ແມ່ນມີຍອດເຫຼືອ 57.893,95 ຕື້ກີບ ເພີ່ມຂຶ້ນ 13,74% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ, ໃນນີ້ ເງິນຝາກຂອງທະນາຄານທຸລະກິດຢູ່ ທຫລ ເພີ່ມຂຶ້ນ 17,36% ແລະ ເງິນສົດໃນຍອດຈໍລະຈອນເພີ່ມຂຶ້ນ 2,78%. ສາເຫດຕົ້ນຕໍ ຍ້ອນ ທຫລ ໄດ້ຈັດຕັ້ງປະຕິບັດນະໂຍບາຍເງິນຕາໃນທິດທາງທີ່ຮັດກຸມຂຶ້ນ ເປັນຕົ້ນ ການປັບເພີ່ມອັດຕາສ່ວນເງິນແຮຝາກບັງຄັບ ຈຳນວນ 02 ຄັ້ງ ເຮັດໃຫ້ເງິນແຮຝາກບັງຄັບເພີ່ມຂຶ້ນ ບວກກັບ ທະນາຄານທຸລະກິດໄດ້ມີການເພີ່ມທຶນຈົດທະບຽນຕາມກົດໝາຍ **(ຮູບສະແດງ 10 ແລະ ຕາຕະລາງຊ້ອນທ້າຍ 7)**.

ຮູບສະແດງ 10. ໂຄງປະກອບຂອງຖານເງິນຕາ




ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ.

[6] ມະຕິສະພາແຫ່ງຊາດຮັບຮອງ ≥ 50% ຂອງມູນຄ່າການສົ່ງອອກ.

3.5. ປະລິມານເງິນ

ປະລິມານເງິນ M2 ໃນປີ 2023 ມີຍອດທັງໝົດ 252.992,65 ຕື້ກີບ ເພີ່ມຂຶ້ນ 33,26% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ກວມເອົາ 95,30% ຕໍ່ການຂະຫຍາຍຕົວຂອງເສດຖະກິດແຫ່ງຊາດ[7] ເຊິ່ງການເພີ່ມຂຶ້ນດັ່ງກ່າວ ແມ່ນຍ້ອນການປ່ອຍສິນເຊື່ອເພື່ອຊຸກຍູ້ພາກສ່ວນເສດຖະກິດ, ກະແສເງິນລົງທຶນໂດຍກົງຈາກຕ່າງປະເທດ, ລາຍຮັບຈາກການສົ່ງອອກສິນຄ້າ ແລະ ການອ່ອນຄ່າຂອງເງິນກີບທີ່ກະທົບຕໍ່ເງິນຝາກທີ່ເປັນເງິນຕາຕ່າງປະເທດ. ສໍາລັບອົງປະກອບຂອງປະລິມານເງິນ ປະກອບມີ: ເງິນຝາກສະກຸນເງິນກີບ ກວມເອົາ 27,69%, ສະກຸນເງິນຕາຕ່າງປະເທດ ກວມເອົາ 68,68% ແລະ ເງິນສົດຢູ່ຂອດຈໍລະຈອນ ກວມເອົາ 3,63% (**ຮູບສະແດງ 11 ແລະ ຕາຕະລາງຊ້ອນທ້າຍ 9**).

ຮູບສະແດງ 11. ການຂະຫຍາຍຕົວຂອງປະລິມານເງິນ M2



ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ.


3.6. ອັດຕາດອກເບ້ຍ

ອັດຕາດອກເບ້ຍເງິນກູ້ໄລຍະເວລາ 1 ປີ ຂອງທະນາຄານທຸລະກິດສະເລ່ຍທົ່ວລະບົບ ສໍາລັບສະກຸນເງິນກີບ ໄດ້ປັບຫຼຸດລົງຈາກລະດັບ 9,73% ມາຢູ່ທີ່ລະດັບ 9,49%; ສະກຸນເງິນບາດ ໄດ້ຫຼຸດລົງຈາກລະດັບ 8,37% ມາຢູ່ທີ່ລະດັບ 7,70%; ສະກຸນເງິນໂດລາສະຫະລັດ ໄດ້ຫຼຸດລົງຈາກລະດັບ 8,11% ມາຢູ່ທີ່ລະດັບ 7,61% ເມື່ອທຽບກັບປີ 2022. ໃນຂະນະທີ່ອັດຕາດອກເບ້ຍເງິນຝາກ ໄລຍະເວລາ 1 ປີ ຂອງທະນາຄານທຸລະກິດສະເລ່ຍທົ່ວລະບົບສະກຸນເງິນກີບ ໄດ້ເພີ່ມຂຶ້ນຈາກລະດັບ 5,36% ມາເປັນ 5,46%; ສະກຸນເງິນບາດ

[7] GDP ປີ 2023 = 265.475 ຕື້ກີບ

ແລະ ສະກຸນເງິນໂດລາສະຫະລັດ ໄດ້ຫຼຸດລົງເລັກນ້ອຍ ຈາກລະດັບ 3,33% ມາຢູ່ທີ່ລະດັບ 3,15% ແລະ ຈາກລະດັບ 3,72% ມາຢູ່ທີ່ລະດັບ 3,61% ເມື່ອທຽບກັບປີ 2022 ຕາມລຳດັບ **(ຮູບສະແດງ 12)**.

ຮູບສະແດງ 12. ອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ຂອງທະນາຄານທຸລະກິດ ໄລຍະ 12 ເດືອນ




ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ.

3.7. ເງິນຝາກ


ເງິນຝາກທະນາຄານທຸລະກິດ ຮອດເດືອນ 12 ປີ 2023 ມີຍອດທັງໝົດ 243.719,60 ຕື້ກີບ (ບໍ່ລວມເງິນຝາກຂອງຜູ້ບໍ່ມີພູມລຳເນົາຢູ່ ສປປ ລາວ) ເພີ່ມຂຶ້ນ 35,17% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ, ໃນນັ້ນ ເງິນຝາກເປັນສະກຸນເງິນກີບ ເພີ່ມຂຶ້ນ 15,99% ກວມເອົາ 28,70% ຂອງເງິນຝາກທັງໝົດ ແລະ ເງິນຝາກເປັນສະກຸນເງິນຕາຕ່າງປະເທດ ເພີ່ມຂຶ້ນ 44,81% ກວມເອົາ 71,30% ຂອງເງິນຝາກທັງໝົດ ແລະ ເພີ່ມຂຶ້ນ 91,81% ຈາກ 83,63% ຕໍ່ GDP ໃນປີ 2022 ໄປຄຽງຄູ່ກັບການຂະຫຍາຍຕົວຂອງອັດຕາສ່ວນເງິນຝາກທີ່ເປັນເງິນຕາຕ່າງປະເທດ ຕໍ່ປະລິມານເງິນ (M2) **(ຮູບສະແດງ 13, 14 ແລະ ຕາຕະລາງຊ້ອນທ້າຍ 10)**.

ຮູບສະແດງ 13. ໂຄງປະກອບຂອງເງິນຝາກ



ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ.

ຮູບສະແດງ 14. ການຂະຫຍາຍຕົວຂອງຍອດເງິນຝາກ



ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ.

3.8. ສິນເຊື່ອ

ຮອດເດືອນ 12 ປີ 2023 ສິນເຊື່ອຂອງທະນາຄານທຸລະກິດ ມີຍອດທັງໝົດ 166.089,74 ຕື້ກີບ ໄດ້ຂະຫຍາຍຕົວເພີ່ມຂຶ້ນ 29,19% ເມື່ອທຽບໃສ່ປີຜ່ານມາ ຊຶ່ງກວມເອົາ 62,56% ຂອງ GDP. ໃນນີ້, ສິນເຊື່ອທີ່ສະໜອງໃຫ້ແກ່ຂະແໜງການຕ່າງໆຂະຫຍາຍຕົວເພີ່ມຂຶ້ນ ເມື່ອທຽບໃສ່ໄລຍະດຽວກັນຂອງປີ 2022 ເປັນຕົ້ນ: ຂະແໜງຂົນສົ່ງ 37,57%, ຂະແໜງບໍລິການ 36,85%, ຂະແໜງອຸດສາຫະກຳ 33,84%, ຂະແໜງການຄ້າ 31,73%, ຂະແໜງກໍ່ສ້າງ 29,39%, ຂະແໜງກະສິກຳ 19,64%, ຂະແໜງຫັດຖະກຳ 3,66% ແລະ ຂະແໜງອື່ນໆ 22,91%, ແຕ່ສິນເຊື່ອໃຫ້ແກ່ຂະແໜງສະໜອງວັດຖຸ ແລະ ເຕັກນິກ ຫຼຸດລົງ 3,36%; ໃນຂະນະທີ່ສິນເຊື່ອທີ່ບໍ່ເກີດດອກອອກຜົນ (NPLs) ໄດ້ຫຼຸດລົງຈາກ 2,16% ໃນປີ 2022 ເປັນ 1,41% ໃນປີ 2023. ຢ່າງໃດກໍດີ ການອ່ອນຄ່າຂອງອັດຕາແລກປ່ຽນສະກຸນເງິນກີບທຽບໃສ່ເງິນຕາຕ່າງປະເທດ ກໍເປັນໜຶ່ງປັດໄຈທີ່ເຮັດໃຫ້ການຂະຫຍາຍສິນເຊື່ອເພີ່ມຂຶ້ນ **(ຮູບສະແດງ 15 ແລະ ຕາຕະລາງຊ້ອນທ້າຍ 12)**.

ສະນັ້ນ, ເພື່ອຜັນຂະຫຍາຍຂໍ້ຕົກລົງ ສະບັບເລກທີ 93/ນຍ[8], ທຫລ ໄດ້ອອກ 2 ຂໍ້ຕົກລົງຄື: ນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ[9] ແລະ ນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ[10]. ຮອດທ້າຍປີ 2023 ນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ໄດ້ສຳເລັດການຄົ້ນຄວ້າ ແລະ ຜ່ານການພິຈາລະນາ ຈຳນວນ


[8] ຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ແລະ ນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ສະບັບເລກທີ 93/ນຍ , ລົງວັນທີ 14 ກໍລະກົດ 2023.

[9] ຂໍ້ຕົກລົງວ່າດ້ວຍການຜັນຂະຫຍາຍການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ສະບັບເລກທີ 765/ທຫລ, ລົງວັນທີ 22 ສິງຫາ 2023.

[10] ຂໍ້ຕົກລົງວ່າດ້ວຍການຜັນຂະຫຍາຍການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ສະບັບເລກທີ 766/ທຫລ, ລົງວັນທີ 22 ສິງຫາ 2023.

13 ຫ້ອໜ່ວຍທຸລະກິດ ແລະ ນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ໄດ້ສຳເລັດການຄົ້ນຄວ້າ ແລະ ຜ່ານການພິຈາລະນາ ຈຳນວນ 7 ຫ້ອໜ່ວຍທຸລະກິດ.

ຮູບສະແດງ 15. ສິນເຊື່ອຂອງທະນາຄານທຸລະກິດ ແຍກຂະແໜງການ



ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ.

3.9. ລະບົບສະຖາບັນການເງິນ

ເພື່ອສືບຕໍ່ເຮັດໃຫ້ການຄຸ້ມຄອງທະນາຄານທຸລະກິດ (ທທກ) ມີປະສິດທິພາບ ແລະ ໝັ້ນຄົງ, ໃນປີ 2023 ທຫລ ໄດ້ສຳເລັດການປັບປຸງກົດໝາຍ ວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 39/ສພຊ, ລົງວັນທີ 17 ກໍລະກົດ 2023, ພ້ອມທັງ ປັບປຸງມີຕິກຳລຸ່ມກົດໝາຍຈຳນວນໜຶ່ງ. ຄຽງຄູ່ກັນນີ້, ຍັງໄດ້ຄົ້ນຄວ້າປັບປຸງຮ່າງຫຼັກການຄຸ້ມຄອງຕາມຄວາມສ່ຽງ, ຄົ້ນຄວ້າແຜນແມ່ບົດໃນການຈັດຕັ້ງປະຕິບັດມາດຕະຖານບາເຊເວຂອງ ທທກ ຈຳນວນ 34 ແຫ່ງ ແລະ ພັດທະນາລະບົບການຈັດການຂໍ້ມູນທາງການເງິນ (MIS) ໃຫ້ນຳໃຊ້ໄດ້ຢ່າງຄ່ອງຕົວ. ນອກຈາກນີ້, ທຫລ ໄດ້ອອກນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ແລະ ສິນເຊື່ອກະຈາຍສູ່ທ້ອງຖິ່ນ[11,12, 13] ເພື່ອສະໜອງແຫຼ່ງທຶນໃຫ້ແກ່ຜູ້ປະກອບການ ເພື່ອຊຸກຍູ້ການຜະລິດພາຍໃນໃຫ້ມີຄວາມເຂັ້ມແຂງ ແລະ ຫຼຸດຜ່ອນການນຳເຂົ້າສິນຄ້າ. ພ້ອມນີ້, ໄດ້ສືບຕໍ່ປັບປຸງໂຄງສ້າງທະນາຄານນະໂຍບາຍ ຫັນເປັນທະນາຄານພັດທະນາຊົນນະບົດ ແນໃສ່ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ

[11] ຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ແລະ ນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ, ສະບັບເລກທີ 93/ນຍ, ລົງວັນທີ 14 ກໍລະກົດ 2023.

[12] ຂໍ້ຕົກລົງວ່າດ້ວຍການຜັນຂະຫຍາຍການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ, ສະບັບເລກທີ 765/ທຫລ, ລົງວັນທີ 22 ສິງຫາ 2023.

[13] ຂໍ້ຕົກລົງວ່າດ້ວຍການຜັນຂະຫຍາຍການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ, ສະບັບເລກທີ 766/ທຫລ, ລົງວັນທີ 22 ສິງຫາ 2023.

ບັນດາເຜົ່າ. ໃນປີ 2023 ທະນາຄານທຸລະກິດ ສາມາດຈັດຕັ້ງປະຕິບັດບັນດາຕົວຊີ້ວັດຄວາມເຂັ້ມແຂງຂອງ ລະບົບທະນາຄານ ເປັນຕົ້ນ ອັດຕາສ່ວນຄວາມພຽງພໍຂອງທຶນ (CAR) ສະເລ່ຍຫຼຸດລົງໃນອັດຕາ 18,18% ຈາກ 18,83% ໃນປີ 2022, ສ່ວນອັດຕາສ່ວນຜົນຕອບແທນຈາກທຶນ (ROE) ແລະ ອັດຕາສ່ວນຜົນຕອບ ແທນຕໍ່ຊັບສິນ (ROA) ໃນປີ 2023 ສະເລ່ຍເພີ່ມຂຶ້ນເປັນ 18,55% ແລະ 1,5% ຈາກ 12,17% ແລະ 1,03% ໃນປີ 2022 (ຕາມລໍາດັບ) ເຊິ່ງຖືວ່າລື່ນແຜນທີ່ກໍານົດໄວ້ ຄື: >8%, >6,4% ແລະ >0,28% (ຕາມລໍາ ດັບ).

ຮອດເດືອນ ທັນວາ 2023, ທົ່ວປະເທດມີທະນາຄານທຸລະກິດ ທັງໝົດ 38 ແຫ່ງ ເຊິ່ງປະກອບມີ: ທະນາຄານທຸລະກິດລັດ 01 ແຫ່ງ, ທະນາຄານສະເພາະກິດ 01 ແຫ່ງ, ທະນາຄານທຸລະກິດລັດຮ່ວມທຶນ 05 ແຫ່ງ, ທະນາຄານເອກະຊົນ 07 ແຫ່ງ (01 ແຫ່ງ ແມ່ນຢູ່ໃນໄລຍະດໍາເນີນການຕາມຂະບວນການຍຸຕິທໍາ), ທະນາຄານທຸລະກິດທີ່ເປັນບໍລິສັດລູກຂອງທະນາຄານຕ່າງປະເທດ 08 ແຫ່ງ ແລະ ສາຂາທະນາຄານທຸລະກິດ ຕ່າງປະເທດ 16 ແຫ່ງ (01 ແຫ່ງ ຢູ່ໃນຂັ້ນຕອນການຍຸບເລີກ ເພື່ອໂຮມເຂົ້າກັນ), ມີສາຂາ ທທກ 116 ສາຂາ, 549 ໜ່ວຍບໍລິການ, 35 ໜ່ວຍແລກປ່ຽນ, ຫ້ອງຜູ້ປະສານງານ 05 ຫ້ອງ ແລະ ຕູ້ ATM 1.493 ຕູ້.

ສໍາລັບສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ມີທັງໝົດ 267 ແຫ່ງ ເພີ່ມຂຶ້ນ 27 ແຫ່ງ ທຽບໃສ່ປີ 2022, ໃນນີ້ ມີ 05 ຮູບແບບ ຄື: ສະຖາບັນການເງິນ ຈຸລະພາກທີ່ຮັບຝາກ (ສກຈຮ) 20 ແຫ່ງ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ (ສສງ) ມີຈໍານວນ 36 ແຫ່ງ (ເພີ່ມຂຶ້ນ 02 ແຫ່ງ), ສະຖາບັນການເງິນທີ່ບໍ່ຮັບເງິນຝາກ (ສກຈບ) 120 ແຫ່ງ (ເພີ່ມຂຶ້ນ 10 ແຫ່ງ), ບໍລິສັດ ເຊົ່າສິນເຊື່ອ (ບສຊ) 31 ແຫ່ງ (ເພີ່ມຂຶ້ນ 02 ແຫ່ງ) ແລະ ໂຮງຊວດຈໍາ (ຮຊຈ) 60 ແຫ່ງ (ເພີ່ມຂຶ້ນ 13 ແຫ່ງ) ຈາກປີຜ່ານມາ.

3.10. ການຄຸ້ມຄອງລະບົບການຊໍາລະ

ລະບົບການຊໍາລະຂອງປະເທດ ແມ່ນໄດ້ຮັບການປັບປຸງ ແລະ ພັດທະນາ ທັນເປັນລະບົບການຊໍາລະທັນ ສະໄໝເທື່ອລະກ້າວ ເຊິ່ງໄດ້ມີສ່ວນຮ່ວມສໍາຄັນໃນການຂັບເຄື່ອນເສດຖະກິດພາຍໃນໃຫ້ມີຄວາມສະດວກ ແລະ ປອດໄພ. ໃນປີ 2023, ກົດໝາຍ ວ່າດ້ວຍລະບົບການຊໍາລະ ໄດ້ຮັບການປັບປຸງ. ທຫລ ສືບຕໍ່ຊຸກຍູ້, ສົ່ງເສີມລະບົບການຊໍາລະ ເພື່ອສ້າງໃຫ້ມີຜະລິດຕະພັນ ແລະ ເຄື່ອງມືການຊໍາລະທີ່ທັນສະໄໝເພີ່ມຂຶ້ນ ແລະ ເພື່ອໃຫ້ລະບົບສາມາດຮອງຮັບ, ອໍານວຍຄວາມສະດວກ, ມີຄວາມວ່ອງໄວ ແລະ ປອດໄພ ໃຫ້ແກ່ສັງຄົມ ໂດຍສະເພາະ ໄດ້ອອກອະນຸຍາດໃຫ້ ທະນາຄານທຸລະກິດ, ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ແລະ ນິຕິບຸກຄົນ ເປັນຜູ້ໃຫ້ບໍລິການຊໍາລະ ທັງໝົດ 53 ແຫ່ງ ເພີ່ມຂຶ້ນ 02 ແຫ່ງ ທຽບໃສ່ປີ 2022. ຄຽງຄູ່ກັນນີ້, ໄດ້ ຊຸກຍູ້ການພັດທະນາລະບົບການຊໍາລະທຸລະກໍາຍ່ອຍໃຫ້ສາມາດຮອງຮັບ ແລະ ບໍລິການແກ່ສັງຄົມ ເຊັ່ນ: ❶ ການຊໍາລະຜ່ານລະບົບການນໍາໃຊ້ບັດຮ່ວມກັນຂອງທະນາຄານທຸລະກິດ (LAPS) ໄດ້ 16 ແຫ່ງ; ❷ ການ ໂອນຂ້າມທະນາຄານ ໄດ້ 15 ແຫ່ງ ເພີ່ມຂຶ້ນ 03 ແຫ່ງ ທຽບໃສ່ປີ 2022 ແລະ ❸ ການໂອນເງິນຜ່ານມືຖືຂ້າມ

ທະນາຄານ ດ້ວຍ QR Code ຜ່ານລະບົບ LMPS ຂອງບໍລິສັດ LAPNet ໄດ້ 15 ແຫ່ງ ເພີ່ມຂຶ້ນ 07 ແຫ່ງ ທຽບໃສ່ປີ 2022. ນອກຈາກນີ້, ທຫລ ໄດ້ຊຸກຍູ້ການເຊື່ອມຕໍ່ລະບົບການຊຳລະຍ່ອຍຂ້າມແດນໃນການຊຳລະຄ່າສິນຄ້າ ແລະ ບໍລິການຜ່ານ QR Code ລະຫວ່າງ ລາວ - ກຳປູເຈຍ ແລະ ລາວ - ສ. ເກົາຫຼີ ໄດ້ຈຳນວນ 10 ທະນາຄານ ທີ່ໄດ້ເປີດນຳໃຊ້ໃນທ້າຍປີ 2023 ແລະ ສຳເລັດການຊຸກຍູ້ການອອກຜະລິດຕະພັນແອບພລິເຄຊັນ Easy Kip ຜ່ານ QR Code ໂດຍບໍ່ໃຊ້ເງິນສົດ ເພື່ອອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວ ສາມາດຊຳລະໃນ ສປປ ລາວ.

ຜ່ານການປະຕິບັດຄືດັ່ງກ່າວ ເຫັນວ່າ ການເຮັດທຸລະກຳຜ່ານເຄື່ອງມືທີ່ທັນສະໄໝພາຍໃນປະເທດ ມີມູນຄ່າເພີ່ມຂຶ້ນ 164,26% ແລະ ທຸລະກຳເພີ່ມຂຶ້ນ 51,60% ທຽບໃສ່ປີ 2022. ໃນນີ້, ການຊຳລະຜ່ານມືຖື (Mobile Banking) ມູນຄ່າເພີ່ມຂຶ້ນ 223,02% ແລະ ທຸລະກຳ ເພີ່ມຂຶ້ນ 52,97%, ການຊຳລະຜ່ານ Internet Banking ມູນຄ່າເພີ່ມຂຶ້ນ 20,19% ແລະ ທຸລະກຳ ເພີ່ມຂຶ້ນ 13,89%, ການໂອນຜ່ານຕູ້ ATM ມູນຄ່າຫຼຸດລົງ 39,70%, ການຊຳລະຜ່ານເງິນເອເລັກໂຕຣນິກ (E-money) ມູນຄ່າເພີ່ມຂຶ້ນ 90% ແລະ ທຸລະກຳເພີ່ມຂຶ້ນ 285,05% ແລະ ການໂອນຜ່ານມືຖືຂ້າມທະນາຄານ ສະກຸນເງິນກີບ ມີມູນຄ່າເພີ່ມຂຶ້ນ 143,57% ແລະ ທຸລະກຳເພີ່ມຂຶ້ນ 285,25%.

3.11. ການຄຸ້ມຄອງຕະຫຼາດຫຼັກຊັບ

ໃນປີ 2023 ໄດ້ສຳເລັດການສ້າງ ແລະ ປັບປຸງນິຕິກຳລຸ່ມກົດໝາຍ ວ່າດ້ວຍຫຼັກຊັບ 07 ສະບັບ; ໄດ້ສຳເລັດການຮັບຮອງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ 01 ຫຼັກສູດ ແລະ ການຄົ້ນຄວ້າແຜນການສ້າງຕັ້ງສະມາຄົມຕະຫຼາດທຶນລາວ; ໄດ້ສຳເລັດການຄົ້ນຄວ້າສ້າງຮູບແບບການຄຸ້ມຄອງ ກອງທຶນເພື່ອການລົງທຶນໃນບໍລິສັດ (Private Equity Fund: PE Fund) ແລະ ກອງທຶນທຸລະກິດຮ່ວມລົງທຶນ (Venture Capital: VC) ຢູ່ ສປປ ລາວ, ໄດ້ສຳເລັດການຄົ້ນຄວ້າອະນຸຍາດໃຫ້ບໍລິສັດອອກຈຳໜ່າຍຮຸ້ນກູ້ 05 ບໍລິສັດ, ໃນນີ້ 04 ບໍລິສັດ ແມ່ນອອກຢູ່ຕ່າງປະເທດ ແລະ ສາມາດລະດົມທຶນໄດ້ທຽບເທົ່າ 3.998,77 ຕື້ກີບ, ເຮັດໃຫ້ຍອດລະດົມທຶນມີມູນຄ່າທັງໝົດຈຳນວນ 43.218,35 ຕື້ກີບ (ຮຸ້ນ 6.818,73 ຕື້ກີບ, ຮຸ້ນກູ້ 23.295,79 ຕື້ກີບ ແລະ ພັນທະບັດລັດຖະບານ 13.103,82 ຕື້ກີບ) ກວມເອົາ 16,28% ຂອງການຂະຫຍາຍຕົວຂອງເສດຖະກິດແຫ່ງຊາດ[14] ແລະ ບໍລິສັດຈົດທະບຽນໃນ ຕລຊລ ມີທັງໝົດ 10 ແຫ່ງ. ນອກຈາກນີ້, ຍັງໄດ້ຂົນຂວາຍບໍລິສັດພາຍໃນປະເທດທີ່ມີເງື່ອນໄຂ ແລະ ບໍລິສັດລົງທຶນໂດຍກົງຈາກຕ່າງປະເທດ (FDI) ເພື່ອເປັນເປົ້າໝາຍອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນໃນກະດານຮອງ ໃນຕະຫຼາດຫຼັກຊັບລາວ.


[14] ຕົວເລກ GDP ປີ 2023: 265.475 ຕື້ກີບ.

IV. ດຸນການຊຳລະກັບຕ່າງປະເທດ

4.1. ດຸນການຊຳລະລວມ


ໃນປີ 2023, ຕົວເລກດຸນການຊຳລະກັບຕ່າງປະເທດລວມ ເກີນດຸນ 197 ລ້ານໂດລາສະຫະລັດ, ເນື່ອງຈາກ ດຸນບັນຊີຊຳລະປົກກະຕິ ເກີນດຸນ 404,52 ລ້ານໂດລາສະຫະລັດ. ພ້ອມນີ້, ດຸນບັນຊີການເງິນ ມີກະແສເງິນໄຫຼເຂົ້າ ສຸດທິ 387,93 ລ້ານໂດລາສະຫະລັດ. ໃນທ້າຍປີ 2023 ຄັງສຳຮອງເງິນຕາຕ່າງປະເທດ ຢູ່ໃນລະດັບ 1.677,31 ລ້ານໂດລາສະຫະລັດ ສາມາດກຸ້ມການນຳເຂົ້າສິນຄ້າທັງໝົດໄດ້ 4,6 ເດືອນ[15] (**ຮູບສະແດງ 16, 17 ແລະ ຕາຕະລາງຊ້ອນທ້າຍ 1 ແລະ 13**).

ຮູບສະແດງ 16. ດຸນການຊຳລະກັບຕ່າງປະເທດ



ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ.

ຮູບສະແດງ 17. ລວມຍອດຄັງສຳຮອງເງິນຕາຕ່າງປະເທດ




ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ.

[15] ມູນຄ່າສິນຄ້ານຳເຂົ້າທັງໝົດໃນປີ 2023 ແມ່ນນຳໃຊ້ 364,27 ລ້ານໂດລາສະຫະລັດ ເຊິ່ງບໍ່ລວມສິນຄ້າທີ່ມີແຫຼ່ງທຶນຮອງຮັບຢູ່ຕ່າງປະເທດ, ໃນນັ້ນ ລວມມີ ສິນຄ້າທີ່ໄດ້ຮັບນະໂຍບາຍການສົ່ງເສີມການລົງທຶນ ປະກອບດ້ວຍລະຫັດເສຍພາສີຫລຸດຜ່ອນຕາມນະໂຍບາຍສົ່ງເສີມການລົງທຶນ; ເສຍພາສີ, ຍົກເວັ້ນອາກອນ ແລະ ພັນທະອື່ນໆຕາມກົດຫມາຍສົ່ງເສີມການລົງທຶນ; ຍົກເວັ້ນອາກອນມູນຄ່າເພີ້ມ, ເສຍພາສີແລະພັນທະອື່ນໆຕາມກົດຫມາຍສົ່ງເສີມລົງທຶນ ແລະ ອື່ນໆ.

4.2. ດຸນບັນຊີຊໍາລະປົກກະຕິ

ໃນປີ 2023, ດຸນບັນຊີຊໍາລະປົກກະຕິ ເກີນດຸນ 404,52 ລ້ານໂດລາສະຫະລັດ ປັບຕົວດີຂຶ້ນຈາກຂາດດຸນ 458,75 ລ້ານໂດລາສະຫະລັດ ໃນປີຜ່ານມາ. ສາເຫດຕົ້ນຕໍມາຈາກ ດຸນບໍລິການ ເກີນດຸນ 380,09 ລ້ານໂດລາສະຫະລັດ ເມື່ອທຽບປີຜ່ານມາແມ່ນຂາດດຸນ 332,28 ລ້ານໂດລາສະຫະລັດ, ເນື່ອງຈາກ ສປປ ລາວ ເປີດປະເທດຕັ້ງແຕ່ເດືອນ 05/2022 ເຮັດໃຫ້ນັກທ່ອງທ່ຽວຕ່າງປະເທດ ເດີນທາງເຂົ້າປະເທດຫຼາຍຂຶ້ນ ແລະ ສາມາດສ້າງລາຍຮັບຈາກການທ່ອງທ່ຽວ ເພີ່ມຂຶ້ນ ເຊິ່ງຈໍານວນນັກທ່ອງທ່ຽວໃນປີນີ້ເພີ່ມຂຶ້ນເປັນ 3 ລ້ານກວ່າ ເທື່ອຄົນ ຈາກ 1 ລ້ານກວ່າ ເທື່ອຄົນ ໃນປີຜ່ານມາ ແລະ ເມື່ອສົມທຽບໃສ່ໄລຍະກ່ອນການລະບາດພະຍາດໂຄວິດ-19 ທີ່ມີຈໍານວນປະມານ 4 ລ້ານກວ່າເທື່ອຄົນຕໍ່ປີ. ສໍາລັບຈໍານວນນັກທ່ອງທ່ຽວທີ່ເຂົ້າມາຫຼາຍກວ່າໝູ່ ມີ ໄທ, ສສ. ຫວຽດນາມ ແລະ ສປ.ຈີນ ກວມເອົາ 33%, 27% ແລະ 16% (ຕາມລໍາດັບ). ພ້ອມນີ້, ລາຍຮັບຄ່າບໍລິການຂົນສົ່ງກໍເພີ່ມຂຶ້ນ ຊຶ່ງສ່ວນໃຫຍ່ແມ່ນລາຍຮັບບໍລິການຂົນສົ່ງຜູ້ໂດຍສານ-ສິນຄ້າຜ່ານທາງລົດໄຟລາວ ຈີນ ແລະ ຄ່າບິນຜ່ານນ່ານຟ້າ. ສໍາລັບດຸນລາຍຮັບຂັ້ນໜຶ່ງ ທີ່ຍັງສືບຕໍ່ຂາດດຸນ 1.075,04 ລ້ານໂດລາສະຫະລັດ ແຕ່ຂາດດຸນຫຼຸດລົງ 22,95% ເມື່ອທຽບໃສ່ປີຜ່ານມາ. ສາເຫດຍ້ອນການຊໍາລະດອກເບ້ຍເງິນກູ້ຢືມຕ່າງປະເທດຂອງພາກເອກະຊົນ ຫຼຸດລົງ. ສ່ວນດຸນລາຍຮັບຂັ້ນສອງ ແມ່ນສືບຕໍ່ເກີນດຸນ 378,30 ລ້ານໂດລາສະຫະລັດ ເພີ່ມຂຶ້ນ 20,23% ເມື່ອທຽບໃສ່ປີຜ່ານມາ. ສາເຫດຍ້ອນລາຍຮັບເງິນຊ່ວຍເຫຼືອລ້າຂອງພາກລັດ ແລະ ລາຍຮັບເງິນໂອນສ່ວນບຸກຄົນ ເພີ່ມຂຶ້ນ (**ຮູບສະແດງ 18**).

ຮູບສະແດງ 18. ໂຄງປະກອບຂອງດຸນບັນຊີຊໍາລະປົກກະຕິ




ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ.

4.3. ດຸນບັນຊີການເງິນ

ໃນປີ 2023, ດຸນບັນຊີການເງິນ ຍັງສືບຕໍ່ມີກະແສເງິນໄຫຼເຂົ້າສຸດທິ 387,93 ລ້ານໂດລາສະຫະລັດ ແຕ່ ຫຼຸດລົງ 45,08% ເມື່ອທຽບໃສ່ປີຜ່ານມາ, ຍ້ອນກະແສເງິນລົງທຶນໂດຍກົງຈາກຕ່າງປະເທດ ໄຫຼເຂົ້າສຸດທິ 1.781,18 ລ້ານໂດລາສະຫະລັດ ເພີ່ມຂຶ້ນ 145,25% ເມື່ອທຽບໃສ່ປີຜ່ານມາ, ໃນນີ້ ຂະແໜງການທີ່ມາ ລົງທຶນຫຼາຍກ່າວໝູ່ແມ່ນຂະແໜງການໄຟຟ້າ ກວມເອົາ 47,64%, ຮອງລົງມາແມ່ນຂະແໜງການຂຸດຄົ້ນບໍ່ແຮ່ ກວມເອົາ 15,04% ແລະ ຂະແໜງການດ້ານການເງິນ ກວມເອົາ 14,29%. ສຳລັບປະເທດທີ່ມາລົງທຶນຫຼາຍທີ່ ສຸດແມ່ນປະເທດ ສປ. ຈີນ ກວມເອົາ 65,48%, ຮົງກົງ ແລະ ປະເທດໄທ ກວມເອົາ 13,72% ແລະ 12,66% (ຕາມລຳດັບ). ໃນຂະນະທີ່ການລົງທຶນໃນຫຼັກຊັບ ມີກະແສເງິນໄຫຼອອກສຸດທິ 98,87 ລ້ານໂດລາສະຫະລັດ, ຍ້ອນພາກເອກະຊົນຊຳລະຕົ້ນທຶນພັນທະບັດໃຫ້ແກ່ຕ່າງປະເທດ. ສ່ວນການລົງທຶນອື່ນໆ ແມ່ນມີກະແສເງິນ ໄຫຼອອກສຸດທິ 1.294,38 ລ້ານໂດລາສະຫະລັດ, ຍ້ອນທະນາຄານທຸລະກິດ, ລັດຖະບານ ແລະ ພາກເອກະ ຊົນ ຊຳລະຕົ້ນທຶນເງິນກູ້ຢືມຈາກຕ່າງປະເທດ (**ຮູບສະແດງ 19 ແລະ ຕາຕະລາງຊ້ອນທ້າຍ 13**).

ຮູບສະແດງ 19. ໂຄງປະກອບຂອງດຸນບັນຊີການເງິນ




ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ.

V. ໜີ້ສິນຕ່າງປະເທດ

ຮອດທ້າຍປີ 2023, ຍອດໜີ້ສິນຕ່າງປະເທດຂອງລັດຖະບານ ມີມູນຄ່າ 10.253,09 ລ້ານໂດລາ ສະຫະລັດ ຫຼຸດລົງ 2,30% ເມື່ອທຽບໃສ່ປີຜ່ານມາ ແລະ ກວມ 74,15% ຂອງ GDP. ໃນນັ້ນ, ຍອດເງິນກູ້ ຢືມ ມີຈຳນວນ 9.088,22 ລ້ານໂດລາສະຫະລັດ ຫຼຸດລົງ 2,80% ເມື່ອທຽບໃສ່ປີຜ່ານມາ ແລະ ກວມ 88,64% ຂອງຍອດໜີ້ສິນຕ່າງປະເທດຂອງລັດຖະບານທັງໝົດ. ສ່ວນຍອດໜີ້ສິນຕ່າງປະເທດທີ່ເປັນ ພັນທະບັດ ມີຈຳນວນ 1.164,87 ລ້ານໂດລາສະຫະລັດ ເພີ່ມຂຶ້ນ 1,71% ເມື່ອທຽບໃສ່ປີຜ່ານມາ ແລະ ກວມ 11,36% ຕໍ່ຍອດໜີ້ສິນຕ່າງປະເທດຂອງລັດຖະບານທັງໝົດ (**ຮູບສະແດງ 20 ແລະ ຕາຕະລາງຊ້ອນທ້າຍ 15**).

ຮູບສະແດງ 20. ໜີ້ສິນຕ່າງປະເທດ



ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ.

VI. ທ່າອ່ຽງທາງດ້ານເສດຖະກິດຂອງ ສປປ ລາວ ໃນປີ 2024

ເສດຖະກິດຂອງ ສປປ ລາວ ໃນປີ 2024 ຄາດວ່າຈະສືບຕໍ່ຂະຫຍາຍຕົວ ເຖິງແມ່ນວ່າຈະມີປັດໄຈສ່ຽງຫຼາຍດ້ານ ຈາກສະພາບແວດລ້ອມສາກົນ ແລະ ພາກພື້ນ ທີ່ຍັງຈະສືບຕໍ່ມີຄວາມຜັນແປຢ່າງສັບສົນ ບວກກັບປັດໄຈພາຍໃນຫຼາຍດ້ານ ໂດຍສະເພາະ ສະພາບອັດຕາເງິນເຟີ້ທີ່ຍັງສູງ, ພາລະໜີ້ສິນກັບຕ່າງປະເທດ ແລະ ລາຍຮັບງົບປະມານຍັງຈຳກັດ. ຢ່າງໃດກໍ່ດີ, ຄາດວ່າ ປີ 2024 ເປັນປີທີ່ມີທ່າແຮງດີກວ່າປີຜ່ານມາ ແລະ ອັດຕາການຂະຫຍາຍຕົວຂອງເສດຖະກິດ ຈະຢູ່ລະຫວ່າງ 4,3% ຫາ 4,5%[16] ໂດຍຈະໄດ້ຮັບແຮງຍູ້ຈາກການດຳເນີນນະໂຍບາຍເສດຖະກິດມະຫາພາກ, ນະໂຍບາຍການເງິນ-ເງິນຕາ, ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ສົມທົບກັບທ່າແຮງຂອງຂະແໜງບໍລິການ ທີ່ໄດ້ຮັບແຮງຍູ້ໜູນຈາກ ປີທ່ອງທ່ຽວລາວ ແລະ ການເປັນເຈົ້າພາບຈັດກອງປະຊຸມອາຊຽນ.

ສະນັ້ນ, ເພື່ອຮັກສາສະຖຽນລະພາບດ້ານເງິນຕາແຫ່ງຊາດ, ປະກອບສ່ວນຊຸກຍູ້ການຂະຫຍາຍຕົວຢ່າງໝັ້ນທ່ຽງ ແລະ ຍືນຍົງຂອງເສດຖະກິດແຫ່ງຊາດ ແລະ ສ້າງສະພາບທີ່ເປັນມິດກັບການລົງທຶນ ແລະ ການດຳເນີນທຸລະກິດ, ທຫລ ຈະສືບຕໍ່ດຳເນີນນະໂຍບາຍເງິນຕາແບບຮັດກຸມ ໂດຍຖືເອົາສະຖຽນລະພາບທາງດ້ານເງິນຕາເປັນກົກ, ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດໃຫ້ມີຄວາມຢືດຢຸ່ນ ເພື່ອສ່ອງແສງສະພາບຕົວຈິງຫຼາຍຂຶ້ນ ໄປພ້ອມກັບການຄຸ້ມຄອງປະລິມານເງິນໃນລະບົບເສດຖະກິດ ໃຫ້ແທດເໝາະກັບຄວາມຕ້ອງການໃນແຕ່ລະໄລຍະ ແລະ ບໍ່ສ້າງແຮງກົດດັນຕໍ່ຄ່າເງິນກີບ; ຄຽງຄູ່ກັບ ການຄວບຄຸມຕິດຕາມຈັງຫວະການຂະຫຍາຍຕົວຂອງສິນເຊື່ອໃຫ້ຢູ່ໃນລະດັບທີ່ເໝາະສົມ, ປັບປຸງກົນໄກການຄຸ້ມຄອງເງິນຕາຕ່າງປະເທດ ເປັນຕົ້ນ: ຮີບຮ້ອນຄົ້ນຄວ້າ ແລະ ປັບປຸງ ດ້ານນິຕິກຳ ແລະ ລະບົບຄຸ້ມຄອງ

[16] ບົດລາຍງານຫຍໍ້ສະຫຼຸບຂາດຕົວລວມຍອດຜະລິດຕະພັນພາຍໃນ (GDP) ປີ 2023 ແລະ ຕີລາຄາສະພາບທ່າອ່ຽງເສດຖະກິດ ປີ 2024 ຂອງ ສປປ ລາວ ຂອງສູນສະຖິຕິແຫ່ງຊາດ.

ກະແສເງິນຕາຕ່າງປະເທດໃຫ້ຄົບຖ້ວນ, ຊຸກຍູ້ແຫຼ່ງລາຍຮັບເງິນຕາຕ່າງປະເທດໃຫ້ເຂົ້າສູ່ລະບົບທະນາຄານ ໃຫ້ໄດ້ຢ່າງໜ້ອຍ 70% ເພື່ອສ້າງຄວາມສົມດຸນທາງດ້ານເງິນຕາຕ່າງປະເທດ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຄັງສຳຮອງເງິນຕາຕ່າງປະເທດ; ສືບຕໍ່ຊຸກຍູ້ການເຊື່ອມຕໍ່ລະບົບຊຳລະຂ້າມແດນກັບປະເທດອ້ອມຂ້າງ ແລະ ຊຸກຍູ້ການນຳໃຊ້ສະກຸນເງິນທ້ອງຖິ່ນເຂົ້າໃນການຄ້າ ແລະ ການລົງທຶນກັບຕ່າງປະເທດ. ພ້ອມດຽວກັນນີ້, ຈະສືບຕໍ່ຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນໃນຮູບແບບຕ່າງໆ ໃຫ້ມີຄວາມເຂັ້ມແຂງ ແລະ ໝັ້ນຄົງ, ພ້ອມທັງ ສະໜອງແຫຼ່ງທຶນໃຫ້ແກ່ຫ້ວໜ່ວຍທຸລະກິດ ເພື່ອຊຸກຍູ້ການຜະລິດພາຍໃນເພື່ອສົ່ງອອກ ແລະ ທົດແທນການນຳເຂົ້າ ອັນເປັນແຫຼ່ງລາຍຮັບເງິນຕາຕ່າງປະເທດແບບຍືນຍົງ ແລະ ຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດ ຂອງ ສປປ ລາວ.

ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ



ທ່ານ ບຸນເຫຼືອ ສິນໄຊວໍຣະວົງ
ຜູ້ວ່າການທະນາຄານແຫ່ງ ສປປ ລາວ



ທ່ານ ນ.ວັດທະນາ ດາລາລອຍ
ຮອງຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ



ທ່ານ ນ.ຂັນແກ້ວ ຫຼ້າມະນີເງົາ
ຮອງຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ

ສະພາບໍລິຫານທະນາຄານແຫ່ງ ສປປ ລາວ

ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ	ຜູ້ວ່າການທະນາຄານແຫ່ງ ສປປ ລາວ	ປະທານ
ທ່ານ ປອ. ພູທະນຸເພັດ ໄຊສົມບັດ	ຮອງລັດຖະມົນຕີກະຊວງການເງິນ	ຮອງປະທານ
ທ່ານ ນ. ວັດທະນາ ດາລາລອຍ	ຮອງຜູ້ວ່າການທະນາຄານ ແຫ່ງ ສປປ ລາວ	ຮອງປະທານ
ທ່ານ ປອ. ສະຖາບັນດິດ ອິນສີຊຽງໃໝ່	ຮອງລັດຖະມົນຕີ, ກະຊວງແຜນການ ແລະ ການລົງທຶນ	ກຳມະການ
ທ່ານ ປອ. ມະໂນທອງ ວົງໄຊ	ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ	ກຳມະການ
ທ່ານ ທອງພັດ ວົງມະນີ	ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້	ກຳມະການ
ທ່ານ ນ. ທິບພະກອນ ຈັນທະວົງສາ	ຮອງລັດຖະມົນຕີ ຮອງຫົວໜ້າຫ້ອງວ່າການສຳນັກງານ ນາຍົກລັດຖະມົນຕີ	ກຳມະການ
ທ່ານ ປອ. ກິແກ້ວ ຈັນທະບຸຣີ	ຮອງຫົວໜ້າສະຖາບັນຄົ້ນຄວ້າ ເສດຖະກິດແຫ່ງຊາດ	ກຳມະການ
ທ່ານ ສຈ. ປອ. ພູເພັດ ກ້ຽວພິລາວົງ	ຄະນະບໍດີຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ	ກຳມະການ

ຄະນະກຳມະການນະໂຍບາຍເງິນຕາຂອງສະພາບໍລິຫານ

ທ່ານ ປອ. ບຸນເຫຼືອ ສິນໄຊຈໍຣະວົງ	ຜູ້ວ່າການທະນາຄານແຫ່ງ ສປປ ລາວ	ປະທານ
